ບໍລິສັດ ພົງສະຫວັນ ປະກັນໄພ (ເອພີເອ) ຈຳກັດ
PHONGSAVANH INSURANCE (APA) CO., LTD

# ສັນຍາປະກັນຊີວິດ ອີຊີ ໂກລ/ຊິວເວີ້

## ເງື່ອນໄຂສັນຍາ

ວັນທີ: 01 June 2024



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

# ສາລະບານ

**ພາກທີ່ 1: ປະກັນຊີວິດ……………………………………………………………………………………………4**

ມາດຕາ 01: ສັນຍາປະກັນຊີວິດ ອີຊີ ……………………………………………………………………………4

ມາດຕາ 02: ການອະທິບາຍຄຳສັບ ……………………………………………………………………………… 4

ມາດຕາ 03: ການຄຸ້ມຄອງ ຂອງສັນຍາປະກັນຊີວິດ ……………………………………………………………5

ມາດຕາ 04: ຂໍ້ຍົກເວັ້ນ ……………………………………………………………………………………………5

ມາດຕາ 05: ຂອບເຂດກຳນົດອາຍຸຂອງຜູ້ໄດ້ຮັບການປະກັນໄພ………………………………………………6

ມາດຕາ 06: ການຈ່າຍຄ່າປະກັນໄພ ……………………………………………………………………………6

ມາດຕາ 07: ການແຈ້ງເສຍຊີວິດ …………………………………………………………………………………6

ມາດຕາ 08: ຜູ້ຮັບຜົນປະໂຫຍດ …………………………………………………………………………………6

ມາດຕາ 09: ການຈ່າຍສິນປະກັນໄພ ……………………………………………………………………………6

**ພາກທີ່ 2: ປະກັນສຸຂະພາບ ………………………………………………………………………………………7**

ມາດຕາ 01: ການອະທິບາຍຄຳສັບ ………………………………………………………………………………7

ມາດຕາ 02: ອານາເຂດການຄຸ້ມກັນ ……………………………………………………………………………9

ມາດຕາ 03: ໄລຍະຍົກເວັ້ນການຄຸ້ມຄ້ອງ (ສຳລັບຜູ້ໄດ້ຮັບການປະການໄພໃຫມ່) ………………………………10

ມາດຕາ 04: ການແຈ້ງ ແລະ ປະກອບເອກະສານຮ້ອງຂໍສິນທົດແທນປະກັນໄພ ………………………………10

ມາດຕາ 05: ຄ່າອອກໂຮງໝໍ ……………………………………………………………………………………11

ມາດຕາ 06: ການປະກັນໄພອື່ນ …………………………………………………………………………………11

ມາດຕາ 07: ການຍົກເລີກສັນຍາປະກັນໄພກ່ອນກຳນົດ ………………………………………………………11

ມາດຕາ 08: ສັນຍາປະກັນໄພເປັນໂມຄະ ………………………………………………………………………12

ມາດຕາ 09: ການຄຸ້ມຄອງຂອງປະກັນ ສຸຂະພາບ ……………………………………………………………12

ມາດຕາ 10: ການຄຸ້ມຄອງການປິ່ນປົວຄົນເຈັບນອນໂຮງໝໍ ຫລື ຜູ້ປ່ວຍໃນ…………………………………12

ມາດຕາ 11: ຄ່າມືແພດຜ່າຕັດ…………………………………………………………………………………13

ມາດຕາ 12: ການຄຸ້ມຄອງຈາກການປິ່ນປົວຄົນເຈັບເຂດນອກ ແລະ ສຸກເສີນ…………………………………13

ມາດຕາ 13: ຂໍ້ຍົກເວັ້ນ…………………………………………………………………………………………13

ມາດຕາ 14: ການສິ້ນສຸດຄວາມຄຸ້ມຄອງຂອງສັນຍາປະກັນໄພ ………………………………………………15

**ພາກທີ່ 3: ປະກັນໄພອຸປະຕິເຫດສ່ວນບຸກຄົນ …………………………………………………………………19**

ມາດຕາ 01: ການຄຸ້ມຄອງ ………………………………………………………………………………………19

ມາດຕາ 02: ຂໍ້ຍົກເວັ້ນ …………………………………………………………………………………………19

ມາດຕາ 03: ຂອບເຂດກຳນົດອາຍຸຂອງຜູ້ໄດ້ຮັບການປະກັນໄພ ………………………………………………20

ມາດຕາ 04: ຂອບເຂດກຳນົດເຂດແດນທີ່ໄດ້ຮັບການຄຸ້ມກັນ …………………………………………………20



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

ມາດຕາ 05: ຕາຕະລາງຜົນປະໂຫຍດ ……………………………………………………………………………………21

ມາດຕາ 06: ເງື່ອນໄຂທົ່ວໄປ ……………………………………………………………………………………21

ມາດຕາ 07: ຕາຕະລາງຄິດໄລ່ສິນທົດແທນອັດຕາພິການ ……………………………………………………………22

**ພາກທີ່ 4: ຂໍ້ກຳນົດສຸດທ້າຍ ……………………………………………………………………………………24**

ມາດຕາ 01: ອາຍຸ ແລະ ການຄຸ້ມຄອງ ……………………………………………………………………………24

ມາດຕາ 02: ການດັດແກ້ສັນຍາປະກັນໄພ …………………………………………………………………………24

ມາດຕາ 03: ການແກ້ໄຂຂໍ້ຂັດແຍ່ງ ………………………………………………………………………………25



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

# ພາກທີ I ປະກັນຊີວິດ

**ມາດຕາ 01: ສັນຍາປະກັນຊີວິດ ອິຊີ**

ສັນຍາປະກັນໄພ ແມ່ນຂໍ້ຕົກລົງທາງດ້ານກົດໝາຍລະຫວ່າງ ຜູ້ຊື້ປະກັນໄພ ແລະ ຜູ້ປະກັນໄພ. ຊຶ່ງຜູ້ປະກັນໄພໄດ້ຕົກລົງຄຸ້ມຄອງ ແລະ ຈະຈ່າຍຜົນປະໂຫຍດທີ່ກໍານົດໄວ້ ໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ ແລະ ຜູ້ຊື້ປະກັນໄພ ຕົກລົງຈ່າຍຄ່າປະກັນໄພ. ສັນຍາປະກັນໄພ ແມ່ນປະກອບມີເງື່ອນໄຂທົ່ວໄປ ແລະ ເງື່ອນໄຂສະເພາະຂອງສັນຍາປະກັນໄພ ລວມເປັນເອກະສານສັນຍາປະກັນໄພຄົບຊຸດ;

**ມາດຕາ 02: ການອະທິບາຍຄໍາສັບ**

ທຸກໆຄໍາສັບທີ່ຖືກນໍາໃຊ້ໃນເງື່ອນໄຂທົ່ວໄປຂອງສັນຍາປະກັນໄພຊີວິດສະບັບນີ້ມີເນື້ອໃນ ແລະ ຄວາມໝາຍດັ່ງຕໍ່ລົງໄປນີ້:

| | | |
|---|---|---|
| **ປະກັນຊີວິດ** | ໝາຍເຖິງ | ການປະກັນຊີວິດປະເພດໜຶ່ງຂອງ ບໍລິສັດ ພົງສະຫວັນ ປະກັນໄພ (ເອພີເອ) ຈໍາກັດ ທີ່ໃຫ້ການຄຸ້ມກັນການເສຍຊີວິດຂອງຜູ້ໄດ້ຮັບການປະກັນໄພ ໂດຍຈ່າຍສິນປະກັນໄພໃຫ້ແກ່ຜູ້ຮັບຜົນປະໂຫຍດ ໃນກໍລະນີຜູ້ໄດ້ຮັບການປະກັນໄພເສຍຊີວິດໂດຍອີງຕາມຂໍ້ກໍານົດຂອງສັນຍາປະກັນໄພ ແລະ ໄລຍະເວລາຂອງສັນຍາທີ່ມີຜົນບັງຄັບໃຊ້ |
| **ຜູ້ປະກັນໄພ** | ໝາຍເຖິງ | ບໍລິສັດ ພົງສະຫວັນ ປະກັນໄພ (ເອພີເອ) ຈໍາກັດ ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດປະກັນໄພ ຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ຊຶ່ງຈະເປັນຜູ້ໃຫ້ການຄຸ້ມຄອງທາງດ້ານການປະກັນໄພ ແກ່ຜູ້ໄດ້ຮັບປະກັນໄພຕາມສັນຍາ; |
| **ຜູ້ຊື້ປະກັນໄພ** | ໝາຍເຖິງ | ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຮັດສັນຍາປະກັນໄພກັບຜູ້ປະກັນໄພ ແລະ ໄດ້ຈ່າຍຄ່າປະກັນໄພ ຢ່າງຖືກຕ້ອງຄົບຖ້ວນຕາມສັນຍາ ແລະ ຜູ້ຊື້ປະກັນໄພ ອາດຈະເປັນບຸກຄົນດຽວກັນກັບຜູ້ໄດ້ຮັບການປະກັນໄພ; |
| **ຜູ້ໄດ້ຮັບການປະກັນໄພ** | ໝາຍເຖິງ | ບຸກຄົນທີ່ຖືກລະບຸຊື່ໄວ້ໃຫ້ເປັນຜູ້ໄດ້ຮັບການຄຸ້ມຄອງ ໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ; |
| **ຜູ້ຮັບຜົນປະໂຫຍດ** | ໝາຍເຖິງ | ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ຖືກເລືອກໂດຍຜູ້ຊື້ປະກັນໄພ ເພື່ອຮັບເອົາສິນປະກັນໄພຕາມທີ່ໄດ້ລະບຸໄວ້ໃນສັນຍາປະກັນໄພ; |
| **ສິນປະກັນໄພ** | ໝາຍເຖິງ | ມູນຄ່າເງິນຜົນປະໂຫຍດຈາກການເສຍຊີວິດ ທີ່ຜູ້ປະກັນໄພຈະຈ່າຍໃຫ້ກັບຜູ້ຮັບຜົນປະໂຫຍດຕາມສັນຍາປະກັນໄພ ຫາກຜູ້ໄດ້ຮັບປະກັນໄພເສຍຊີວິດ; |
| **ຄ່າປະກັນໄພ** | ໝາຍເຖິງ | ມູນຄ່າເງິນ ທີ່ຜູ້ຊື້ປະກັນໄພ ຕ້ອງຈ່າຍໃຫ້ກັບຜູ້ປະກັນໄພຕາມມູນຄ່າ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມວິທີການທີ່ໄດ້ຕົກລົງກັນໄວ້ໃນສັນຍາປະກັນໄພ; |
| **ເງື່ອນໄຂທົ່ວໄປຂອງສັນຍາປະກັນໄພ** | ໝາຍເຖິງ | ພາກສ່ວນໜຶ່ງຂອງສັນຍາປະກັນໄພ ທີ່ໄດ້ກໍານົດບັນດາເງື່ອນໄຂ ແລະ ຂໍ້ກໍານົດທົ່ວໄປຂອງການປະກັນໄພໄວ້ຢ່າງຄົບຖ້ວນ ຊຶ່ງທຸກສັນຍາປະກັນໄພຖືກກໍານົດໃຫ້ປະຕິບັດຕາມທຸກເງື່ອນໄຂ ແລະ ຂໍ້ກໍານົດທົ່ວໄປນີ້ |
| **ເງື່ອນໄຂສະເພາະຂອງສັນຍາປະກັນໄພ** | ໝາຍເຖິງ | ພາກສ່ວນໜຶ່ງຂອງສັນຍາປະກັນໄພ ທີ່ໄດ້ກໍານົດບັນດາຂໍ້ມູນລາຍລະອຽດ, ເງື່ອນໄຂ ແລະ ຂໍ້ກໍານົດສະເພາະຂອງແຕ່ລະສັນຍາປະກັນໄພໄວ້ ຊຶ່ງແຕ່ລະສັນຍາອາດຈະມີເງື່ອນໄຂ ແລະ ຂໍ້ກໍານົດທີ່ຄືກັນ ຫຼື ຕ່າງກັນກໍໄດ້; |



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| **ພະຍາດທີ່ເປັນມາກ່ອນ** | ໝາຍເຖິງ | ເງື່ອນໄຂທາງດ້ານຮ່າງກາຍ, ຄວາມບົກພ່ອງ ຫລື ອາການເຈັບປ່ວຍ ຫລື ພະຍາດ ທີ່ໄດ້ຮັບການບົ່ງມະຕິ, ການປິ່ນປົວ ຫລື ໄດ້ປຶກສາຫາລື ຈາກ ແພດ ຫລື ຜູ້ຊ່ຽວຊານ ໃນເວລາໃດກໍ່ຕາມກ່ອນວັນທີ ທີ່ເຮັດສັນຍາປະກັນໄພ ຫລື ວັນທີແກ້ໄຂຫຼ້າສຸດຂອງສັນຍາປະກັນໄພ (ຖ້າມີ), ໂດຍຈະເບິ່ງວ່າວັນທີໃດແມ່ນວັນທີຫລ້າສຸດ. ສໍາລັບຈຸດປະສົງນີ້ແລ້ວ, ການເຈັບປ່ວຍໃດໆ ຫລື ພະຍາດທີ່ໄດ້ເກີດຂຶ້ນໃນຂະນະມີການພິສູດ, ການບົ່ງມະຕິ ຫລື ການຮັກສາ ຫລື ມີສິ່ງບົ່ງບອກ ຫລື ອາການຊີ້ແຈງໃຫ້ເຫັນຢ່າງຊັດເຈນວ່າເປັນຜົນໃຫ້ບຸກຄົນດັ່ງກ່າວຕ້ອງ ໄດ້ຮັບການປິ່ນປົວ ຫລື ຮັກສາ. |
| **ພະຍາດລະບາດ** (Epidemic) | ໝາຍເຖິງ | ພະຍາດທີ່ລະບາດ ແລະ ແຜ່ກະຈາຍເປັນວົງກວ້າງພາຍໃນແຂວງ, ປະເທດ ຫຼື ພູມິພາກ. |
| **ພະຍາດລະບາດໃຫ່ຍ** (Pandemic) | ໝາຍເຖິງ | ພະຍາດທີ່ລະບາດ ແລະ ແຜ່ກະຈາຍເປັນວົງກວ້າງໄປທົ່ວໂລກ ໂດຍມີການປະກາດຮັບຮອງຂອງອົງການອະນາໄມໂລກ |
| **ຜູ້ປ່ວຍພາຍໃນ** | ໝາຍເຖິງ | ໝາຍເຖິງຜູ້ໄດ້ຮັບການປະກັນໄພ ທີ່ນອນໂຮງໝໍເປັນເວລາຫຼາຍກວ່າຫົກ (6) ຊົ່ວໂມງຕໍ່ເນື່ອງຂຶ້ນໄປ |

**ມາດຕາ 03: ການຄຸ້ມຄອງ ຂອງສັນຍາປະກັນຊີວິດ**

ສັນຍາປະກັນຊີວິດອີຊີ ຈະໃຫ້ການຄຸ້ມຄອງຕໍ່ຜູ້ໄດ້ຮັບປະກັນໄພ ເມື່ອຜູ້ໄດ້ຮັບປະກັນໄພ ໄດ້ເສຍຊີວິດ, ຜູ້ປະກັນໄພ ຈະຈ່າຍສິນປະກັນໄພໃຫ້ກັບຜູ້ຮັບຜົນປະໂຫຍດຂອງຜູ້ກ່ຽວ ຕາມທີ່ໄດ້ກໍານົດໄວ້ໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ (ເວັ້ນແຕ່ ກໍລະນີດັ່ງກ່າວຫາກເປັນກໍລະນີຍົກເວັ້ນການຄຸ້ມຄອງຕາມທີ່ໄດ້ກໍານົດໄວ້ໃນເງື່ອນໄຂທົ່ວໄປຂອງສັນຍາປະກັນໄພ ສະບັບນີ້). ຜູ້ໄດ້ຮັບປະກັນໄພ ສາມາດຊື້ປະກັນໄພນີ້ໄດ້ໂດຍບໍ່ຈໍາເປັນຕ້ອງກວດສຸຂະພາບ ແຕ່ຕ້ອງຕອບແບບສອບຖາມທາງສຸຂະພາບ.

ສໍາລັບສາມ (3) ເດືອນທໍາອິດປະກັນໄພຊີວິດ ອີຊີ ຈະໃຫ້ການຄຸ້ມຄອງຕໍ່ຜູ້ໄດ້ຮັບປະກັນໄພ ໃນກໍລະນີທີ່ເສຍຊີວິດຍ້ອນອຸປະຕິເຫດເທົ່ານັ້ນ.

ຜູ້ໄດ້ຮັບການປະກັນໄພຜູ້ໜຶ່ງສາມາດຊື້ໄດ້ພຽງໜຶ່ງສັນຍາ ຂອງແຕ່ລະທາງເລື່ອກຂອງສັນຍາປະກັນຊີວິດ ອີຊີ.

**ມາດຕາ 04: ຂໍ້ຍົກເວັ້ນ**

4.1 ປະກັນຊີວິດນີ້ ຈະບໍ່ໃຫ້ການຄຸ້ມຄອງຜູ້ໄດ້ຮັບປະກັນໄພຕໍ່ກັບບັນດາກໍລະນີ ດັ່ງຕໍ່ໄປນີ້:

4.1.1 ເງື່ອນໄຂ ພະຍາດທີ່ມີຢູ່ກ່ອນແລ້ວ

4.1.2 ການຂ້າຕົວຕາຍ ຫຼື ພະຍາຍາມຂ້າຕົວຕາຍ, ການທໍາຮ້າຍຕົນເອງ (ໃນຂະນະທີ່ມີສະຕິ ຫຼື ບໍ່ກໍຕາມ);

4.1.3 ການເສຍຊີວິດຈາກພະຍາດທີ່ເປັນມາກ່ອນເຮັດສັນຍາ

4.1.4 ການເສຍຊີວິດທີ່ມີຜົນມາຈາກການຕິດເຊື້ອເອສ໌ຈໄອວີ (HIV) ລວມທັງຕິດເຊື້ອໂລກເອດສ໌ (AIDS)

4.1.5 ພະຍາດລະບາດ(Epidemic) ແລະ ພະຍາດລະບາດໃຫ່ຍ(Pandemic)

4.1.6 ຕິດຢາເສບຕິດ ຫຼື ຢາກະຕຸ້ນ ຫຼື ດື່ມເຫຼົ້າຂັ້ນຮຸນແຮງ ຫຼື ມີຜົນຂ້າງຄຽງຈາກການເສບຕິດ;

4.1.7 ມີສ່ວນພົວພັນກັບກໍາລັງທະຫານ ຫຼື ກອງກໍາລັງປະກອບອາວຸດ ເພື່ອຮັກສາຄວາມປອດໄພໃຫ້ກັບປະເທດ ຫຼື ອົງການປົກຄອງໃດໜຶ່ງ.

4.1.8 ກໍ່ໃຫ້ເກີດມີການຄາດຕະກໍາ, ທໍາຮ້າຍ ຫຼື ພະຍາຍາມໃຫ້ເກີດມີການຂົ່ມຂູ່

4.1.9 ສິລະປະປ້ອງກັນຕົວ, ຕີມວຍ, ກິລາທາງອາກາດ ເຊິ່ງລວມມີການໂດດຈ້ອງ, ກິລາເຫີນອາກາດ, ໂດດບັນຈີຈໍ້າ, ການແຂ່ງຂັນຄວາມໄວເທິງຫິມະ ຫຼື ກິລາເທິງນໍ້າກ້ອນ, ຂີ່ບ່ອນລູນ, ກິດຈະກໍາໃຕ້ນໍ້າ ທີ່ມີຄວາມເລິກກວ່າ 50 ແມັດ, ການປີນເຂົາ ຫຼື ໄຕ່ໜ້າຜາ

4.1.10 ກໍລະນີໄພພິບັດຮ້າຍແຮງ ຫຼື ສົງຄາມ ທີ່ມີຄົນເສຍຊີວິດແຕ່ 30% ຂອງຈໍານວນຜູ້ໄດ້ຮັບການປະກັນໄພທັງໝົດຂຶ້ນໄປ

4.2 ປະກັນຊີວິດນີ້ ຈະບໍ່ໃຫ້ການຄຸ້ມຄອງ ແລະ ຈະບໍ່ຈ່າຍຄ່າຜົນປະໂຫຍດໃດໆສໍາລັບຄວາມພິການຖາວອນທັງໝົດ, ຄວາມພິການຖາວອນບາງສ່ວນ, ຄວາມພິການຊົ່ວຄາວ ຫຼື ຄວາມພິການໃດໆຂອງຜູ້ໄດ້ຮັບການປະກັນໄພ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

**ມາດຕາ 05: ຂອບເຂດກຳນົດອາຍຸຂອງຜູ້ໄດ້ຮັບການປະກັນໄພ**

ຜູ້ໄດ້ຮັບການປະກັນໄພ ມີອາຍຸບໍ່ຕ່ຳກ່ວາ 18 ປີ ແລະ ບໍ່ເກີນ 60 ປີ ໃນວັນທີ່ເລີ່ມເຮັດສັນຍາປະກັນໄພໃໝ່,ຜູ້ໄດ້ຮັບການປະກັນໄພທີ່ມີອາຍຸແຕ່ 55ປີ ເຖິງ 60ປີ ຕ້ອງໄດ້ຊື້ປະກັນໄພນີ້ຄວບຄູ່ກັນກັບບຸກຄົນທີ່ມີອາຍຸຕ່ຳກວ່າ 55ປີ, ການແຈ້ງອາຍຸຂອງຜູ້ໄດ້ຮັບການປະກັນໄພແມ່ນໜ້າທີ່ຂອງຜູ້ຊື້ປະກັນໄພ. ໃນວັນທີ່ເລີ່ມເຮັດສັນຍາປະກັນໄພໃໝ່ຜູ້ໄດ້ຮັບການປະກັນໄພ ມີອາຍຸຕ່ຳກ່ວາ 18 ປີ ຫຼື ຫລາຍກ່ວາ 60 ປີ, ກໍລະນີ ຜູ້ໄດ້ຮັບການປະກັນໄພເສຍຊີວິດ ຜູ້ປະກັນໄພຈະບໍ່ຈ່າຍສິນປະກັນໄພໃດໆໃຫ້ແກ່ຜູ້ຮັບຜົນປະໂຫຍດ ນອກຈາກວ່າໄດ້ຮັບການຕົກລົງເຫັນດີ ເປັນລາຍລັກອັກສອນຈາກຜູ້ປະກັນໄພເທົ່ານັ້ນ.

**ມາດຕາ 06: ການຈ່າຍຄ່າປະກັນໄພ**

ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຕ້ອງຈ່າຍຄ່າປະກັນໄພເປັນລາຍໄຕມາດ(3ເດືອນ) ຫຼື ລາຍປີ ຕາມກຳນົດວັນທີຈ່າຍໃນເງື່ອນໄຂສະເພາະ, ສັນຍາປະກັນໄພນີ້ມີໄລຍະຜ່ອນຜັນໃນການຊຳລະເງິນຄ່າປະກັນໄພຕາມລາຍລະອຽດຂ້າງລຸ່ມນີ້:

**ພາຍໃນຊ່ວງເວລາ 3ປີ ທຳອິດໃນການເຂົ້າປະກັນໄພ**

ມີໄລຍະຜ່ອນຜັນ 15 ວັນ ຫຼັງຈາກມື້ຄົບກຳນົດຈ່າຍ, ຖ້າຜູ້ໄດ້ຮັບການປະກັນໄພເສຍຊີວິດໃນຊ່ວງນີ້ ຜູ້ປະກັນໄພຈະຈ່າຍເງິນສິນປະກັນໄພຕາມທີ່ໄດ້ກຳນົດໄວ້, ແຕ່ຖ້າຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພບໍ່ຈ່າຍເງິນຄ່າປະກັນໄພກາຍ 15ວັນ ຂຶ້ນໄປ ຜູ້ປະກັນໄພຈະບໍ່ຈ່າຍເງິນສິນປະກັນໄພໃຫ້ແກ່ຜູ້ຮັບຜົນປະໂຫຍດແຕ່ຢ່າງໃດ

ເຖິງຢ່າງໃດກໍຕາມ ຖ້າຈ່າຍເງິນຄ່າປະກັນໄພພາຍໃນ 30ວັນ ຫຼັງຈາກມື້ຄົບກຳນົດຈ່າຍ ສັນຍາຈະມີຜົນບັງຄັບໃຊ້ຕໍ່ໄປ ແຕ່ຖ້າເກີນ 30ວັນ ສັນຍາຈະເປັນໂມຄະ

**ພາຍໃນຊ່ວງຫຼັງຈາກ 3ປີ ທຳອິດໃນການເຂົ້າປະກັນໄພ**

ມີໄລຍະຜ່ອນຜັນ 30ວັນ ຫຼັງຈາກມື້ຄົບກຳນົດຈ່າຍ, ຖ້າຜູ້ໄດ້ຮັບການປະກັນໄພເສຍຊີວິດໃນຊ່ວງນີ້ ຜູ້ປະກັນໄພຈະຈ່າຍເງິນສິນປະກັນໄພຕາມທີ່ໄດ້ກຳນົດໄວ້, ແຕ່ຖ້າຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພບໍ່ຈ່າຍເງິນຄ່າປະກັນໄພກາຍ 30ວັນ ຂຶ້ນໄປ ຜູ້ປະກັນໄພຈະບໍ່ຈ່າຍເງິນສິນປະກັນໄພໃຫ້ແກ່ຜູ້ຮັບຜົນປະໂຫຍດແຕ່ຢ່າງໃດ

ເຖິງຢ່າງໃດກໍຕາມ ຖ້າຈ່າຍເງິນຄ່າປະກັນໄພພາຍໃນ 60ວັນ ຫຼັງຈາກມື້ຄົບກຳນົດຈ່າຍ ສັນຍາຈະມີຜົນບັງຄັບໃຊ້ຕໍ່ໄປ ແຕ່ຖ້າເກີນ 60ວັນ ສັນຍາຈະເປັນໂມຄະ

**ມາດຕາ 07: ການແຈ້ງເສຍຊີວິດ**

ລູກຫຼານ,ຍາດຕິພີ່ນ້ອງຂອງຜູ້ໄດ້ຮັບການປະກັນໄພ ສາມາດແຈ້ງການເສຍຊີວິດຂອງຜູ້ໄດ້ຮັບການປະກັນໄພ ໃຫ້ແກ່ຜູ້ປະກັນໄພຮັບຊາບຢ່າງເປັນລາຍລັກອັກສອນ ໂດຍແຈ້ງມາທີ່ ຜູ້ປະກັນໄພ ບໍລິສັດ ພົງສະຫວັນ ປະກັນໄພ (ເອພີເອ) ຈຳກັດ ສຳນັກງານໃຫຍ່ ຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານທາດຫຼວງໃຕ້, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ໝາຍເລກໂທລະສັບ: 021 855555, ສາຍດ່ວນ 1677 ອີເມວ: info@apa.com.la ພາຍໃນກຳນົດເວລາ 90ວັນ ນັບຈາກວັນເສຍຊີວິດ

**ມາດຕາ 08: ຜູ້ຮັບຜົນປະໂຫຍດ**

ກໍລະນີ ການເສຍຊີວິດຂອງຜູ້ໄດ້ຮັບການປະກັນໄພ ຜູ້ປະກັນໄພຈະຈ່າຍສິນປະກັນໄພໃຫ້ແກ່ຜູ້ມີສິດໄດ້ຮັບຜົນປະໂຫຍດ ດັ່ງທີ່ໄດ້ລະບຸໄວ້ໃນຕາຕະລາງເງື່ອນໄຂສະເພາະຂອງສັນຍາປະກັນໄພ,ໃນກໍລະນີຜູ້ຮັບຜົນປະໂຫຍດໃດໜຶ່ງຫາກເສຍຊີວິດກ່ອນຜູ້ໄດ້ຮັບການປະກັນໄພ, ຜູ້ໄດ້ຮັບການປະກັນໄພຕ້ອງໄດ້ແຈ້ງຊື່ຜູ້ຮັບຜົນປະໂຫຍດຄົນໃໝ່ໃຫ້ຜູ້ປະກັນໄພຮັບຊາບ ບໍ່ດັ່ງນັ້ນ ຜູ້ປະກັນໄພຈະຈ່າຍເງິນສິນປະກັນໄພໃຫ້ແກ່ ຜູ້ຮັບຜົນປະໂຫຍດຄົນອື່ນທີ່ມີຊື່ລະບຸໃນຕາຕະລາງເງື່ອນໄຂສະເພາະ ຫຼື ຖ້າບໍ່ມີຊື່ຜູ້ຮັບຜົນປະໂຫຍດຄົນອື່ນໃນຕາຕະລາງເງື່ອນໄຂສະເພາະ ຜູ້ປະກັນໄພຈະຈ່າຍໃຫ້ບຸກຄົນທີ່ມີສາຍພົວພັນໃນຄອບຄົວທີ່ຖືກຕ້ອງຕາມກົດໝາຍ

**ມາດຕາ 09: ການຈ່າຍສິນປະກັນໄພ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍສິນປະກັນໄພ, ຜູ້ປະກັນໄພ ຈະພິຈາລະນາຄຳຮ້ອງດັ່ງກ່າວ ແລະ ຈ່າຍສິນປະກັນໄພໃຫ້ກັບຜູ້ຮັບຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ, ກໍລະນີ ຄຳຮ້ອງຂໍດັ່ງກ່າວຖືກຕ້ອງຄົບຖ້ວນຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາປະກັນໄພ ຜູ້ປະກັນໄພ ຈະຈ່າຍສິນປະກັນໄພ ພາຍໃນກຳນົດ 30 ວັນ (ສາມສິບວັນ) ນັບແຕ່ວັນທີ່ໄດ້ຮັບເອກະສານຄຳຮ້ອງຂໍສິນປະກັນໄພທີ່ຖືກຕ້ອງສົມບູນ, ເອກະສານໃນການຮ້ອງຂໍສິນປະກັນໄພປະກອບມີ:

- ໃບຢັ້ງຢືນການເສຍຊີວິດ;
- ບົດລາຍງານສັນນະສູດສົບ (ຖ້າການເສຍຊີວິດ ຈຳເປັນຕ້ອງມີການສັນນະສູດ ຕາມຄຳເຫັນຂອງຜູ້ປະກັນໄພ);
- ບົດບັນທຶກເຈົ້າໜ້າທີ່ຕຳຫຼວດ (ກໍລະນີເສຍຊີວິດ ຈາກອຸປະຕິເຫດ);
- ສຳເນົາບັດປະຈຳຕົວ, ປື້ມສຳມະໂນຄົວ ແລະ ໜັງສືຜ່ານແດນ ຂອງຜູ້ຮັບຜົນປະໂຫຍດ ທີ່ຮ້ອງຂໍສິນປະກັນໄພ;
- ສຳເນົາສັນຍາປະກັນໄພທີ່ກ່ຽວຂ້ອງ;
- ເອກະສານອື່ນ ຕາມການຮ້ອງຂໍຂອງຜູ້ປະກັນໄພ ເພື່ອຢັ້ງກ່ຽວກັບການເສຍຊີວິດຂອງຜູ້ໄດ້ຮັບປະກັນໄພ;

## ພາກທີ II ປະກັນສຸຂະພາບ

**ມາດຕາ 01: ການອະທິບາຍຄຳສັບ.**

ບັນດາຄຳສັບໃນສັນຍາປະກັນໄພ ຫລື ໃບຂໍ້ຕົກລົງຄຸ້ມຄອງທີ່ແນບຕິດສັນຍາປະກັນໄພນີ້ ມີຄວາມໝາຍ ດັ່ງນີ້:

| | | |
|---|---|---|
| **ອຸປະຕິເຫດ** | ໝາຍເຖີງ | ເຫດການເກີດຂຶ້ນໂດຍບໍ່ຄາດຄິດ ແລະ ບໍ່ໄດ້ຕັ້ງໃຈ. |
| **ການເຂົ້າຮັກສາຢູ່ໂຮງໝໍ** | ໝາຍເຖີງ | (ກ) ການຮັກສາໃນໂຮງໝໍຢ່າງຕໍ່ເນື່ອງໃນໂຮງໝໍທີ່ມີຄ່າຫ້ອງພັກລາຍວັນ ແລະ ຄ່າອາຫານ ຊຶ່ງມີການປິ່ນປົວແບບຜູ້ປ່ວຍໃນ (ໄລຍະບໍ່ຫລຸດ 6 ຊົ່ວໂມງ. ຫຼື (ຂ) ການເຂົ້າພັກໃນໂຮງໝໍເພື່ອປິ່ນປົວ, ກວດອາການເຈັບປ່ວຍ, ຫລື ເຝົ້າອາການຢູ່ພະແນກສຸກເສີນໃນໂຮງໝໍ (ໄລຍະບໍ່ຫລຸດ 6 ຊົ່ວໂມງ); ຫຼື (ຄ) ການເຂົ້າຮັບການປິ່ນປົວທີ່ໃຊ້ເວລາໃດໜຶ່ງ ໃນໂຮງໝໍ ຫລື ສະຖານທີ່ປິ່ນປົວ. |
| **ຂໍ້ກຳນົດຂອງການຄຸ້ມຄອງ** | ໝາຍເຖີງ | ຂອບເຂດຂອງການຈ່າຍສິນປະກັນໄພ ທີ່ລະບຸໄວ້ໃນຕາຕະລາງການຄຸ້ມກັນ ໂດຍຂຶ້ນກັບແຕ່ລະແຜນຄຸ້ມຄອງຂອງສັນຍາປະກັນໄພ. |
| **ການບົ່ງມະຕິພະຍາດ** | ໝາຍເຖີງ | ການສະຫຼຸບຢ່າງເປັນທາງການຂອງແພດ ຫລື ຜູ້ຊ່ຽວຊານໂດຍອີງໃສ່ຫຼັກຖານສະເພາະ ທີ່ອ້າງອີງໃນຂໍ້ກຳນົດ ເງື່ອນໄຂ ຂອງສັນຍາສະບັບນີ້. ຫລື ໃນກໍລະນີທີ່ບໍ່ມີຫຼັກຖານສະເພາະເຈາະຈົງ ແມ່ນໃຫ້ອີງຕາມຫຼັກຖານ ທາງລັງສີການແພດ, ການເຈັບປ່ວຍ, ປະຫວັດການປ່ວຍ ຫລື ຫຼັກຖານການວິເຄາະຈາກຜົນເລືອດ, ອາຈົມ ແລະ ອື່ນໆ ຈາກທາງການແພດ ໂດຍການບົ່ງມະຕິດັ່ງກ່າວ ຈະຕ້ອງໄດ້ຮັບການລົງຄຳເຫັນຈາກທ່ານໝໍຂອງບໍລິສັດ ທີ່ຈະໃຫ້ຄວາມເຫັນທາງການແພດ ໃຫ້ແກ່ທ່ານ, ຜູ້ໄດ້ຮັບການປະກັນໄພ , ຈະຕ້ອງໃຫ້ຫລັກຖານເພີ້ມເຕີມຖ້າຫາກມີຄວາມຈຳເປັນຕ້ອງຂໍເພີ້ມ. |
| **ຄ່າໃຊ້ຈ່າຍ** | ໝາຍເຖີງ | ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນການປິ່ນປົວທາງການແພດ ຫລື ການຜ່າຕັດ ພາຍໃຕ້ເງື່ອນໄຂການຄຸ້ມຄອງ ໃນໄລຍະເວລາຂອງສັນຍາປະກັນໄພມີການບັງຄັບໃຊ້. |
| **ສະມາຊິກຄອບຄົວ** | ໝາຍເຖີງ | ຄູ່ສົມລົດ, ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ / ຫລື ລູກ ທີ່ຖືກຕ້ອງໃນທາງດ້ານກົດໝາຍ. |
| **ໂຮງໝໍ** | ໝາຍເຖີງ | ສະຖານທີ່ປິ່ນປົວ 24 ຊົ່ວໂມງ ຕໍ່ ມື້ ທີ່ມີແພດ ແລະ ທ່ານໝໍ ປະຈຳຢູ່, ແລະ ມີອຸປະກອນທາງການແພດ ແລະ ການຜ່າຕັດ ຢ່າງຖືກຕ້ອງຕາມກົດໝາຍ. |
| **ການເຈັບປ່ວຍ/ບໍ່ສະບາຍ** | ໝາຍເຖີງ | ສະພາບທາງຮ່າງກາຍທີ່ມີການເຈັບປ່ວຍ ຫລື ຜິດຈາກປົກກະຕິ. |
| **ການບາດເຈັບ** | ໝາຍເຖີງ | ການບາດເຈັບທາງດ້ານຮ່າງກາຍ ທີ່ມີສາເຫດໂດຍກົງ ແລະບໍ່ຂຶ້ນກັບສາເຫດອຸປະຕິເຫດອື່ນໆ |
| **ຜູ້ປ່ວຍໃນ** | ໝາຍເຖີງ | ຜູ້ຮັບການປະກັນໄພ ໄດ້ຮັບການປິ່ວປົວໃນໂຮງໝໍເປັນໄລຍະເວລາເກີນ (6) ຊົ່ວໂມງຕໍ່ເນື່ອງຂຶ້ນໄປ. |

| | | |
|---|---|---|
| **ຜູ້ໄດ້ຮັບການປະກັນໄພ** | ໝາຍເຖິງ | ບຸກຄົນທີ່ມີລາຍຊື່ໃນສັນຍາປະກັນໄພ. |
| **ບໍລິສັດປະກັນໄພ** | ໝາຍເຖິງ | ບໍລິສັດ ພົງສະຫວັນປະກັນໄພ (ເອພີເອ) ຈຳກັດ. |
| **ຫນ່ວຍຟື້ນຟູຊີບ ຫລືຫ້ອງມໍລະສຸມ ICU** | ໝາຍເຖິງ | ພາກສ່ວນທີ່ຢູ່ໃນໂຮງຫມໍ ທີ່ຖືກມອບຫມາຍໃຫ້ເປັນຫນ່ວຍງານບໍລິການປິ່ນປົວ ໂດຍໂຮງຫມໍດັ່ງກ່າວທີ່ບໍລິການ 24 ຊົ່ວໂມງ ໃນກໍລະນີຜູ້ປ່ວຍທີ່ມີອາການໜັກ ແລະ ຈະຕ້ອງມີອຸປະກອນທີ່ສະໜອງໃຫ້ການບໍລິການພະຍາບານ ແລະ ປິ່ນປົວ ແລະ ຕ້ອງບໍ່ມີຈຸດປະສົງຮັບໃຊ້ໃຫ້ເປົ້າໝາຍອື່ນໃນໂຮງໝໍດັ່ງກ່າວ. ສຳລັບຄວາມໝາຍຂອງຄຳນິຍາມນີ້, ຫນ່ວຍຟື້ນຟູຊີບ ຫຼື ຫ້ອງມໍລະສຸມ ຍັງໝາຍເຖິງ ສູນຮັກສາຫລອດເລືອດຫົວໃຈ, ສູນປິ່ວປົວໂລກຫົວໃຈ ຫລື ສູນປິ່ນປົວພະຍາດຮ້າຍແຮງໃນໂຮງໝໍດັ່ງກ່າວ. |
| **ວັນທີອອກສັນຍາ** | ໝາຍເຖິງ | ວັນທີ ສັນຍາປະກັນໄພທີ່ອອກ ໃຫ້ຜູ້ໄດ້ຮັບປະກັນໄພ ທີ່ໄດ້ລະບຸໄວ້ໃນຕາຕະລາງການຄຸ້ມຄອງ. |
| **ການປິ່ນປົວທາງການແພດທີ່ຈຳເປັນ** | ໝາຍເຖິງ | ການປິ່ນປົວ, ບໍລິການ ຫລື ການໃຫ້ບໍລິການດ້ານການປິ່ນປົວເຊິ່ງລວມມີ: (ກ) ການປິ່ນປົວທີ່ສອດຄ່ອງກັບການວິນິໄສ ແລະ ໃນການຮັກສາ, ການບໍລິການ ຂອງແພດຕໍ່ກັບຄົນເຈັບ, (ຂ) ສອດຄ່ອງກັບມາດຕະຖານປິ່ນປົວຕາມວິຊາຊີບແບບແຜນປະຈຸບັນ, ສາມາດໃຫ້ການພິສູດທາງການແພດວິຊາຊີບ (ຖ້າມີຄວາມຈຳເປັນຕ້ອງນອນຮັກສາ) ຫລື ຢູ່ໂຮງໝໍເຂດຊຸມຊົນຕ່າງໆ, (ຄ) ໂດຍບໍ່ແມ່ນເພື່ອຄວາມສະດວກໃຫ້ຜູ້ໄດ້ຮັບການປະກັນໄພ ຫລື ແພດ ຫລື ຜູ້ຊ່ຽວຊານ ແລະ ບໍ່ສາມາດສະແດງຜົນທາງການແພດໄດ້, (ງ) ບໍ່ແມ່ນການທົດລອງ, ການວິນິໃສ, ຫລື ການຊອກຫາແບບທຳມະຊາດ, ການປ້ອງກັນ ຫລື ກັນຕ່ອງທຳມະຊາດ. |
| **ຜູ້ປ່ວຍນອກ** | ໝາຍເຖິງ | ແມ່ນຜູ້ໄດ້ຮັບປະກັນໄພທີ່ມີການປິ່ນປົວຢູ່ໂຮງຫມໍ ຫລື ຄຼີນິກ ຫລື ຢູ່ເຮືອນ ແຕ່ບໍ່ແມ່ນໃນນາມຂອງຜູ້ປ່ວຍໃນ. |
| **ແພດ** | ໝາຍເຖິງ | ບຸກຄົນທີ່ມີຄຸນນະວຸດທິທາງດ້ານການແພດ ເປັນຜູ້ປະຕິບັດດ້ານການແພດ ໂດຍມີໃບອະນຸຍາດຖືກຕ້ອງຕາມກົດຫມາຍຈາກການແພດສາກົນ ແລະ ໄດ້ຮັບໃບອະນຸຍາດຈາກອົງການທີ່ກ່ຽວຂ້ອງໃນທ້ອງຖິ່ນນັ້ນໃນການປິ່ນປົວ ຫລື ຜ່າຕັດຄົນປ່ວຍທີ່ສອດຄ່ອງກັບໃບອະນຸຍາດ ຫລື ຄວາມຮູ້ໃນຂະແໜງທີ່ແພດນັ້ນໆມີ ແຕ່ບໍ່ແມ່ນຕົວທ່ານ, ຜູ້ໄດ້ຮັບການປະກັນໄພ ແລະ ຄູ່ສົມລົດ ແລະ ສະມາຊິກຄອບຄົວ ຂອງບຸກຄົນເຫຼົ່ານັ້ນ. |
| **ສັນຍາປະກັນໄພ** | ໝາຍເຖິງ | (ກ) ຕາຕະລາງການຄຸ້ມຄອງ,<br>(ຂ) ຕາຕະລາງເງື່ອນໄຂ<br>(ຄ) ໃບສະເຫນີເອົາການປະກັນໄພ<br>(ງ) ໃບສັນຍາເພີ້ມ ( ຖ້າມີ) |
| **ວັນທີສັນຍາປະກັນໄພ** | ໝາຍເຖິງ | ຕາຕະລາງ ວັນທີອອກສັນຍາ ທີ່ລະບຸໃນ ຕາຕະລາງຂອງສັນຍາ ແລະ ແມ່ນວັນຄົບຮອບຂອງສັນຍາ, ສັນຍາເປັນປີ ແລະ ເປັນລາຍເດືອນ ແລະ ຄ່າທຳນຽມຊຳລະທີ່ໄດ້ຖືກກຳນົດໄວ້ນັ້ນ ແມ່ນວັນທີສັນຍາຂອງທ່ານໄດ້ຮັບການຄຸ້ມກັນແລ້ວ. |
| **ຕາຕະລາງສັນຍາ** | ໝາຍເຖິງ | ຕາຕະລາງທີ່ໄດ້ຢັ້ງຢືນອອກໃຫ້ສັນຍາຂອງທ່ານ ເຊິ່ງລະບຸ ຊື່ແຜນການຄຸ້ມກັນ, ຜະລິດຕະພັນ ແລະ /ຫລື ລະຫັດລູກຄ້າຂອງສັນຍາທ່ານ. ສັນຍານີ້ຍັງລວມໃບຢັ້ງຢືນການຕໍ່ສັນຍາ ຫລື ໃບສັນຍາເພີ້ມ. |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| **ໄລຍະຂອງສັນຍາ** | ໝາຍເຖິງ | ໄລຍະເວລາການເລີ່ມໃຫ້ການຄຸ້ມກັນຂອງສັນຍາທ່ານ. |
| **ພະຍາດທີ່ມີຢູ່ກ່ອນ** | ໝາຍເຖິງ | ເງື່ອນໄຂທາງດ້ານຮ່າງກາຍ, ຄວາມບົກພ່ອງ ຫລື ອາການເຈັບປ່ວຍ ຫລື ພະຍາດ ທີ່ໄດ້ຮັບການບົ່ງມະຕິ, ການປິ່ນປົວ ຫລື ໄດ້ປຶກສາຫາລື ຈາກ ແພດ ຫລື ຜູ້ຊ່ຽວຊານ ໃນເວລາໃດກໍ່ຕາມກ່ອນວັນທີ ທີ່ເຮັດສັນຍາປະກັນໄພ ຫລື ວັນທີແກ້ໄຂຫຼ້າສຸດຂອງສັນຍາປະກັນໄພ (ຖ້າມີ), ໂດຍຈະເບິ່ງວ່າວັນທີໃດແມ່ນວັນທີຫລ້າສຸດ. ສຳລັບຈຸດປະສົງນີ້ແລ້ວ, ການເຈັບປ່ວຍໃດໆ ຫລື ພະຍາດທີ່ໄດ້ເກີດຂຶ້ນໃນຂະນະມີການພິສູດ, ການບົ່ງມະຕິ ຫລື ການຮັກສາ ຫລື ມີສິ່ງບົ່ງບອກ ຫລື ອາການຊີ້ແຈງໃຫ້ເຫັນຢ່າງຊັດເຈນວ່າເປັນຜົນໃຫ້ບຸກຄົນດັ່ງກ່າວຕ້ອງ ໄດ້ຮັບການປິ່ນປົວ ຫລື ຮັກສາ. |
| **ຄ່າປະກັນໄພ** | ໝາຍເຖິງ | ຈຳນວນເງິນທີ່ຜູ້ຊື້ປະກັນໄພ ຕ້ອງຈ່າຍໃຫ້ກັບບໍລິສັດປະກັນໄພ ຕາມມູນຄ່າ ແລະ ເງື່ອນໄຂ ທີ່ໄດ້ລະບຸໄວ້ໃນສັນຍາປະກັນໄພ; |
| **ວັນທີຈ່າຍຄ່າປະກັນໄພ** | ໝາຍເຖິງ | ວັນທີ ທີ່ຕ້ອງຊຳລະຄ່າປະກັນໄພ |
| **ອາຍຸສັນຍາປະກັນໄພ** | ໝາຍເຖິງ | ໄລຍະເວລາທີ່ສັນຍາປະກັນໄພມີຜົນບັງຄັບໃຊ້ ຊຶ່ງລະບຸໄວ້ໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ; |
| **ຈິດຕະແພດ** | ໝາຍເຖິງ | ຜູ້ທີ່ມີຄຸນສົມບັດທາງການແພດ ໂດຍໄດ້ຮັບປະລິນຍາທາງການແພດ ໃນການຮັກສາທາງຈິດຕະເວດ ທີ່ໄດ້ຮັບການອະນຸຍາດຖືກຕ້ອງ ຕາມວິຊາຊີບ ໂດຍໄດ້ຮັບອະນຸຍາດ ຫລື ໄດ້ຮັບອະນຸຍາດ ຈາກໜ່ວຍງານທີ່ກ່ຽວຂ້ອງໃນຂົງເຂດວຽກງານດັ່ງກ່າວ ແລະ ມີສິດໃຫ້ການອົບຮົມໄດ້ ແຕ່ຕ້ອງບໍ່ແມ່ນຕົວຜູ້ໄດ້ຮັບການປະກັນໄພ, ຄູ່ສົມລົດ ແລະ ສາມັກຊິກຄອບຄົວ ຂອງຜູ້ໄດ້ຮັບປະກັນໄພເຫຼົ່ານັ້ນ. |
| **ຜູ້ຊື້ປະກັນໄພ** | ໝາຍເຖິງ | ຜູ້ທີ່ໄດ້ຈ່າຍຄ່າປະກັນໄພໃຫ້ບໍລິສັດ. |
| **ຄ່າປິ່ນປົວທີ່ເໝາະສົມ ແລະເຄີຍປະຕິບັດກັນມາ** | ໝາຍເຖິງ | ແມ່ນຄ່າທຳນຽມ ຫລື ຄ່າໃຊ້ຈ່າຍສຳລັບການຮັກສາ, ອຸປະກອນ ຫລື ບໍລິການທາງການແພດ ທີ່ຈຳເປັນໃນການຮັກສາຕາມເງື່ອນໄຂ ແລະ ມາດຕະຖານການປະຕິບັດທາງການແພດ ທີ່ເຫດເໝາະຕໍ່ການບາດເຈັບ ຫລື ການເຈັບປ່ວຍ ໃດໆ ຂອງບຸກຄົນນັ້ນໆ ໂດຍພາຍໃຕ້ການເບິ່ງແຍງຂອງແພດ ຫລື ຊ່ຽວຊານ ທີ່ບໍ່ແມ່ນມາຈາກຄຳເຫັນຂອງບໍລິສັດ: (ກ) ທີ່ເກີນກວ່າລະດັບຄ່າທຳນຽມໃນການຮັກສາທົ່ວໄປ, ການສະໜອງ ຫລື ການບໍລິການ ໃນ ສປປ ລາວ, ແລະ (ຂ) ລວມຄ່າທຳນຽມ ຫລື ຄ່າໃຊ້ຈ່າຍທີ່ບໍ່ໄດ້ເກີດຂຶ້ນຖ້າບໍ່ມີປະກັນໄພ. |
| **ຜູ້ຊ່ຽວຊານ:** | ໝາຍເຖິງ | ຜູ້ທີ່ມີຄຸນນະວຸດທິ ແລະ ໄດ້ ຮັບໃບອະນຸຍາດການແພດ ແລະ ແມ່ນຜູ້ທີ່ຍັງມີຄຸນສົມບັດອັນຈຳເປັນ ແລະ ມີຄວາມຊ່ຽວຊານໃນການຝຶກວິຊາການ ການບົ່ງມະຕິ , ຮັກສາ ແລະ ການປ້ອງກັນ, ແຕ່ຕ້ອງບໍ່ແມ່ນຜູ້ໄດ້ຮັບການປະກັນໄພ ແລະ ຄູ່ສົມລົດ ແລະ ສະມາຊິກໃນຄອບຄົວຂອງຜູ້ໄດ້ຮັບປະກັນໄພດັ່ງກ່າວ. |
| **ການຜ່າຕັດ** | ໝາຍເຖິງ | ຊະນິດຜ່າຕັດໄດ້ລະບຸໄວ້ໃນລາຍການຕາຕະລາງການຜ່າຕັດ |

**ມາດຕາ 02: ອານາເຂດການຄຸ້ມກັນ.**

ສັນຍາປະກັນໄພນີ້ ມີຜົນນຳໃຊ້ໃນຂອບເຂດທົ່ວໂລກ. ແຕ່ການພັກອາໃສຢູ່ໃນພື້ນທີ່ອື່ນ ທີ່ບໍ່ແມ່ນພື້ນທີ່ອາໃສຢູ່ ສປປ ລາວ ແຕ່ຕ້ອງບໍ່ເກີນ 90 ວັນ ເປັນເວລາຕິດຕໍ່ກັນ ພາຍໃນເງື່ອນໄຂຂອງສັນຍາສະບັບນີ້.

ສຳຫລັບສ່ວນບຸກຄົນ ບໍລິສັດຈະບໍ່ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃດໆ ແກ່ຜູ້ຮັບການປະກັນໄພ ທີ່ອາຍຸຕ່ຳກວ່າ 18 ປີ ຫລື ອາຍຸເກີນ 60 ປີ, ເວັ້ນແຕ່ບໍລິສັດຈະຕົກລົງເປັນລາຍລັກອັກສອນໂດຍຈະແຈ້ງເປັນກໍລະນີພິເສດ. ການຮັບຜິດຊອບໃນການຢັ້ງຢືນອາຍຸແມ່ນຈະເປັນພາລະຂອງຜູ້ໄດ້ຮັບປະກັນໄພ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

ການເຕີມຂໍ້ມູນເພື່ອຕອບຄຳຖາມສຸຂະພາບແມ່ນເປັນສິ່ງທີ່ຈຳເປັນສຳຫລັບຜູ້ທີ່ຈະຮັບການປະກັນໄພຕ້ອງໄດ້ເຮັດກ່ອນທີ່ຈະຊື້ປະກັນໄພ ຫລື ຕໍ່ສັນຍາປະກັນໄພ. ແລະ ການກວດສຸຂະພາບພື້ນຖານກໍ່ເປັນສິ່ງທີ່ຈຳເປັນສຳຫລັບຜູ້ຮັບການປະກັນໄພ ທີ່ອາຍຸເກີນ 40 ປີ ທີ່ຈະຕ້ອງໄດ້ເຮັດກ່ອນທີ່ຈະຊື້ປະກັນໄພ ຫລື ຕໍ່ສັນຍາປະກັນໄພ ໂດຍການກວດສຸຂະພາບພື້ນຖານແມ່ນຜູ້ໄດ້ຮັບການປະກັນໄພ ເປັນຄົນຮັບຜິດຊອບເອງ.

**ມາດຕາ 03: ໄລຍະຍົກເວັ້ນການຄຸ້ມຄ້ອງ (ສຳລັບຜູ້ໄດ້ຮັບການປະການໄພໃຫມ່)**

ໄດ້ຮັບການປະກັນໄພໃໝ່ ຈະບໍ່ໄດ້ຮັບການຄຸ້ມຄອງ ສຳລັບບາງພະຍາດ ໃນ 3 ເດືອນ (ສາມເດືອນ) ທຳອິດຂອງໄລຍະປະກັນໄພໂດຍມີລາຍລະອຽດ ດັ່ງລຸ່ມນີ້:

- ອະໄວຍະວະລອດ;
- ກ້ອນເບົ້າ;
- ວັນນະໂລກ;
- ພະຍາດເສັ້ນເລືອດ;
- ມະເຮັງທຸກຊະນິດ;

**ມາດຕາ 04: ການແຈ້ງ ແລະ ປະກອບເອກະສານຮ້ອງຂໍສິນທົດແທນປະກັນໄພ.**

ໄດ້ຮັບການປະກັນໄພ ຈະຕ້ອງແຈ້ງຜູ້ປະກັນໄພ ແລະ ຮຽກຮ້ອງຂໍສິນປະກັນໄພ ຢ່າງຊ້າພາຍໃນກຳນົດ 30 ວັນ (ສາມສິບວັນ) ນັບແຕ່ວັນທີ່ມີການບົ່ງມະຕິ ຫລື ໄດ້ຮັບການປິ່ນປົວ, ດ້ວຍຄ່າໃຊ້ຈ່າຍຂອງຜູ້ໄດ້ຮັບການປະກັນໄພເອງ, ຜູ້ໄດ້ຮັບການປະກັນໄພຕ້ອງສະຫນອງເອກະສານດັ່ງລຸ່ມນີ້ເພື່ອດຳເນີນການຂໍສິນປະກັນໄພ.

- ໃບຮັບເງິນ ແລະ ໃບບິນຕົ້ນສະບັບ;
- ໃບລາຍງານແພດ;
- ເອກະສານອື່ນ ທີ່ກ່ຽວຂ້ອງໃນການປິ່ນປົວ.

ໃນກໍລະນີທີ່ມີຂໍ້ ຂັດແຍ້ງ ຫລື ຕົກລົງກັນບໍ່ໄດ້ ໃນກໍລະນີໃດໆທີ່ກ່ຽວຂ້ອງກັບການບົ່ງມະຕິພະຍາດ ຫລື ຄວາມຖືກຕ້ອງໃນການບົ່ງ ມະຕິພະຍາດ. ຜູ້ປະກັນໄພ ມີສິດໃຫ້ແພດກວດຮ່າງກາຍຂອງຜູ້ໄດ້ຮັບການປະກັນໄພ ແລະ ນຳຫລັກຖານມາໃຊ້ເພື່ອລົງຄຳເຫັນ. ຊ່ຽວຊານທາງການແພດອິດສະລະ ຊຶ່ງເປັນທີ່ຍອມຮັບ ໃນຂົງເຂດດັ່ງກ່າວຈະທຳການກວດ ແລະ ບໍລິສັດຈະເປັນຜູ້ເລືອກຊ່ຽວຊານທາງການແພດດັ່ງກ່າວ.

ຖ້າມີການນຳໃຊ້ບັດປະກັນສຸຂະພາບ ຫຼື ສິນປະກັນໄພໄດ້ຖືກຈ່າຍໄປແລ້ວ, ສຳລັບຄ່າໃຊ້ຈ່າຍໃດໆ ທີ່ບໍ່ໄດ້ຮັບສິດໃນການຄຸ້ມຄອງໃນສັນຍາປະກັນໄພ ແລະ ບໍ່ໄດ້ຖືກຮຽກເກັບໂດຍໂຮງຫມໍ / ຄລີນິກໃນເຄືອຂ່າຍຂອງພວກເຮົາ, ຜູ້ໄດ້ຮັບການປະກັນໄພຕ້ອງຈ່າຍຄ່າໃຊ້ຈ່າຍດັ່ງກ່າວຄືນໃຫ້ກັບບໍລິສັດ ພາຍໃນ 30 ວັນນັບແຕ່ວັນທີທີ່ໄດ້ຮັບແຈ້ງການຈາກບໍລິສັດ ຫຼື ຈາກຜູ້ຕາງຫນ້າຂອງບໍລິສັດ. ຖ້າບໍ່ດັ່ງນັ້ນ ບໍລິສັດມີສິດທີ່ຈະຍົກເລີກການບໍລິການ ເກັບເງິນໂດຍກົງຈາກໂຮງຫມໍ / ຄລີນິກໃນເຄືອຂ່າຍ ຫຼື ອາດຈະຍົກເລີກສັນຍາປະກັນໄພ ໂດຍບໍ່ສົ່ງຄ່າທຳນຽມຄືນກໍໄດ້.

**ການສໍ້ໂກງ**

ຜູ້ໄດ້ຮັບການປະກັນໄພຈະຕ້ອງບໍ່ທຳການໃນທາງທີ່ເປັນການສໍ້ໂກງ. ຖ້າຜູ້ໄດ້ຮັບການປະກັນໄພ ຫຼື ໃຜຜູ້ໜຶ່ງເຮັດໜ້າທີ່ໃນນາມຜູ້ໄດ້ຮັບການປະກັນໄພໄດ້ປະຕິບັດ:

1. ຮຽກຮ້ອງສິນປະກັນໄພພາຍໃຕ້ສັນຍານີ້ ໂດຍທີ່ຮູ້ວ່າການຮຽກຮ້ອງນັ້ນບໍ່ແມ່ນຄວາມຈິງ ຫຼື ການສໍ້ໂກງເກີນຄວາມຈິງ ຫຼື
2. ການແຈ້ງທີ່ເປັນການສະຫນັບສະຫນູນໃນການຮຽກຮ້ອງ ທັງໆທີ່ຮູ້ວ່າການແຈ້ງດັ່ງກ່າວກເປັນການແຈ້ງທີ່ຜິດ ຫຼື
3. ຍື່ນເອກະສານເພື່ອສະຫນັບສະຫນູນໃຫ້ການຮຽກຮ້ອງສິນປະກັນໄພ ທັງໆທີ່ຮູ້ວ່າເປັນເອກະສານທີ່ປອມແປງ ຫຼື ບໍ່ຖືກຕ້ອງ ຫຼື
4. ຮຽກຮ້ອງສິນປະກັນໄພ ຫຼື ຮຽກຮ້ອງຄວາມເສຍຫາຍທີ່ເກີດຈາກການກະທຳທີ່ເຈດຕະນາຂອງຜູ້ໄດ້ຮັບການປະກັນໄພເອງ ຫຼື ມີສ່ວນຮູ້ເຫັນຂອງຜູ້ໄດ້ຮັບການປະກັນໄພ.

**ບໍລິສັດອາດຈະ:**

1. ຈະບໍ່ຈ່າຍຄ່າສິນປະກັນໄພນັ້ນ
2. ຈະບໍ່ຈ່າຍຄ່າຮຽກຮ້ອງສິນປະກັນໄພອື່ນໆທີ່ໄດ້ເກີດຂຶ້ນ ຫຼື ທີ່ຈະເກີດຂຶ້ນໃຕ້ສັນຍານີ້
3. ຂຶ້ນຢູ່ກັບການພິຈາລະນາຂອງບໍລິສັດທີ່ອາດຈະປະກາດໃຫ້ສັນຍາດັ່ງກ່າວເປັນໂມຄະ
4. ບໍລິສັດໄດ້ຮັບສິດທີ່ຈະຮຽກເກັບເງິນຄືນຈາກ ຜູ້ໄດ້ຮັບການປະກັນໄພ ໃນຈໍານວນເງິນທີ່ບໍລິສັດໄດ້ຈ່າຍໃນການຮຽກຮ້ອງສິນປະກັນໄພໄປແລ້ວ ພາຍໃຕ້ສັນຍານີ້
5. ບໍລິສັດຈະບໍ່ສົ່ງຄືນຄ່າປະກັນໄພ
6. ບໍລິສັດອາດຈະແຈ້ງຄວາມຕໍ່ເຈົ້າໜ້າທີ່ຕໍາຫຼວດ.

**ການກວດກາທາງການແພດ.**

ບໍລິສັດມີສິດໃນການກວດສອບປະຫວັດການປິ່ນປົວ, ປະຫັວດການວິເຄາະ ລວມທັງຜົນກວດວິເຄາະ ຫຼື ການສາຍລັງສີ, ຜົນຂອງການທົດສອບພິເສດຂອງຜູ້ໄດ້ຮັບການປະກັນໄພຕາມຄວາມຕ້ອງການໃນປະກັນໄພນີ້. ບໍລິສັດມີສິດທີ່ຈະມີການກວດຮ່າງກາຍຂອງຜູ້ໄດ້ຮັບການປະກັນໄພໂດຍທ່ານໝໍທີ່ໄດ້ຮັບການມອບໝາຍໂດຍບໍລິສັດລວມທັງບົດລາຍງານການຜ່າສົບພິສູດໃນກໍລະນີທີ່ມີຄວາມຈໍາເປັນ ແລະ ບໍ່ຂັດກັບກົດໝາຍພາຍໃຕ້ຄ່າໃຊ້ຈ່າຍຂອງບໍລິສັດ.

ຖ້າບໍລິສັດບໍ່ໄດ້ຮັບອະນຸຍາດໃຫ້ກວດເບິ່ງບັນທຶກທາງການແພດ ແລະ ບັນທຶກການວິນິດໄສຂອງຜູ້ໄດ້ຮັບການປະກັນໄພເພື່ອພິຈາລະນາການຮຽກຮ້ອງ, ບໍລິສັດມີສິດທີ່ຈະປະຕິເສດການຮຽກຮ້ອງຂໍສິນປະກັນໄພດັ່ງກ່າວ.

**ມາດຕາ 05: ຄ່າອອກໂຮງໝໍ.**

ສໍາລັບການເຂົ້ານອນໂຮງຫມໍ ໃນນາມຜູ້ປ່ວຍໃນ 6 ມື້ຕິດຕໍ່ກັນ ຫລື ຫລາຍກວ່ານັ້ນ, ຜູ້ປະກັນໄພ ຈະຈ່າຍເງິນອອກໂຮງຫມໍ ແບບຄັ້ງດຽວຈໍານວນຫນຶ່ງ ແຕ່ບໍ່ເກີນວົງເງິນທີ່ກໍານົດໄວ້ໃນສັນຍາ.

**ມາດຕາ 06: ການປະກັນໄພອື່ນ.**

ຖ້າຜູ້ໄດ້ຮັບການປະກັນໄພ ຫາກມີປະກັນໄພອື່ນ, ຊຶ່ງຄຸ້ມຄອງຄວາມເສຍຫາຍປະເພດດຽວກັນກັບສັນຍາປະກັນໄພນີ້. ບໍລິສັດປະກັນໄພ ຈະປະຕິບັດເປັນແຕ່ກໍລະນີ ດັ່ງຕໍ່ໄປນີ້:

- ບໍລິສັດປະກັນໄພ ຈະທົດແທນຕາມມູນຄ່າຄວາມເສຍຫາຍຕົວຈິງ ຢ່າງເຕັມຈໍານວນ, ຖ້າວ່າສັນຍາປະກັນໄພໄດ້ເຮັດຂຶ້ນກ່ອນສັນຍາປະກັນໄພອື່ນ;
- ບໍລິສັດປະກັນໄພ ຈະທົດແທນຕາມສ່ວນສະເລ່ຍຂອງມູນຄ່າຜົນປະໂຫຍດ ຫາກໄດ້ເຮັດສັນຍາພ້ອມກັນໃນວັນດຽວກັນ;
- ບໍລິສັດປະກັນໄພ ຈະທົດແທນສ່ວນເກີນທີ່ຍັງຂາດ ຂອງຄວາມເສຍຫາຍທີ່ແທ້ຈິງ ທີ່ຜູ້ໄດ້ຮັບການປະກັນໄພ ມີສິດໄດ້ຮັບຈາກສັນຍາປະກັນໄພອື່ນທີ່ເຮັດຂຶ້ນກ່ອນສັນຍາປະກັນໄພນີ້. ຊຶ່ງຈະໄດ້ຮັບການທົດແທນຕາມລໍາດັບ. ທັງນີ້ ຕ້ອງບໍ່ເກີນມູນຄ່າສິນທົດແທນສູງສຸດທີ່ໄດ້ກໍານົດໄວ້ ໃນສັນຍາປະກັນໄພ.

ເຖິງຢ່າງໃດກໍດີ ຜູ້ໄດ້ຮັບການປະກັນໄພ ຫາກສະຫຼະສິດຕໍ່ບໍລິສັດປະກັນໄພໃດໜຶ່ງ ກໍຈະບໍ່ມີຜົນໃດໆຕໍ່ກັບສິດ ແລະ ໜ້າທີ່ຂອງບໍລິສັດປະກັນໄພທີ່ຈະຕ້ອງທົດແທນຕາມສັນຍາປະກັນໄພນີ້ ດັ່ງທີ່ກ່າວມານີ້.

**ມາດຕາ 07: ການຍົກເລີກສັນຍາປະກັນໄພກ່ອນກໍານົດ.**

ຜູ້ໄດ້ຮັບການປະກັນໄພ ສາມາດຍົກເລີກສັນຍາປະກັນໄພນີ້ໄດ້ ດ້ວຍການແຈ້ງລ່ວງໜ້າເປັນລາຍລັກອັກສອນ ຢ່າງໜ້ອຍ 30 ວັນ. ການຍົກເລີກສັນຍາຈະບໍ່ກະທົບຕໍ່ການຮຽກຮ້ອງສິນທົດແທນໃດໆທີ່ເກີດຂຶ້ນກ່ອນວັນທີປະຕິບັດຍົກເລີກ.

ໃບແຈ້ງຍົກເລີກແມ່ນຈະສົ່ງໄປທາງໄປສະນີລົງທະບຽນ ເຖິງ ບໍລິສັດປະກັນໄພ



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

ບໍລິສັດ ຈະສົ່ງຄ່າທຳນຽມຄືນ ໃຫ້ຜູ້ໄດ້ຮັບການປະກັນໄພ ຕາມອັດຕາສ່ວນ ຂອງຄ່າທຳນຽມ ຕາມໄລຍະ ຈາກວັນທີເລີ່ມຍົກເລີກ ຈົນເຖິງວັນທີຕໍ່ສັນຍາງວດຕໍ່ໄປ:

**ຕາຕະລາງອັດຕາສົ່ງຄືນຄ່າປະກັນໄພ**

| ໄລຍະປະກັນໄພບໍ່ເກີນ / ເດືອນ | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
|---|---|---|---|---|---|---|---|---|---|---|---|---|
| ອັດຕາສ່ວນຄ່າປະກັນໄພທີ່ສົ່ງຄືນ | 85% | 75% | 65% | 55% | 45% | 35% | 25% | 20% | 15% | 10% | 5% | 0% |

ຖ້າຫາກມີການຈ່າຍສິນປະກັນໄພພາຍໃຕ້ສັນຍາສະບັບນີ້, ແມ່ນຈະບໍ່ໄດ້ສົ່ງເງິນຄືນ.

**ມາດຕາ 08: ສັນຍາປະກັນໄພເປັນໂມຄະ.**

ສັນຍາປະກັນໄພ ຈະເປັນໂມຄະໂດຍທັນທີ ເມື່ອລູກຄ້າຫາກມີຜິດຕິກຳໃດໜຶ່ງ ດັ່ງຕໍ່ໄປນີ້: ການແຈ້ງ ຫລື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຖ້າຫາກ ຂໍ້ມູນດັ່ງກ່າວກະທົບໃຫ້ການປະເມີນຄວາມສ່ຽງ ທີ່ຖືກນຳສະເໜີນັ້ນ, ການລະບຸໃດໆ ຖ້າຫາກຜູ້ໄດ້ຮັບການປະກັນໄພ ລະເລີຍຂໍ້ຄວາມທີ່ເປັນລາຍລັກອັກສອນ.

ສັນຍາປະກັນໄພທີ່ເປັນໂມຄະ:

(ກ) ກ່ຽວກັບວັນທີຂອງສັນຍາ, ຖ້າຫາກ ການແຈ້ງຫາກບໍ່ຖືກຕ້ອງ, ລະເລີຍ ຫລື ແຈ້ງເທັດໃນເວລາສະເໜີເອົາການປະກັນໄພ; ຫລື

(ຂ) ກ່ຽວກັບວັນທີຕໍ່ສັນຍາຫລ້າສຸດ,( ຖ້າມີ) ຫລື ວັນທີຄຸ້ມກັນຂອງການປ່ຽນແປງແຜນ(ຖ້າມີ) ຫາກໃຫ້ຂໍ້ມູນຜິດພາດ, ລະເລີຍ,

ຫລື ແຈ້ງເທັດ ສິ່ງໃຫ້ບໍລິສັດໃນເວລາສະເໜີເອົາການຕໍ່ສັນຍາ ຫລື ປ່ຽນແປງແຜນຄຸ້ມກັນ.

ບໍລິສັດປະກັນໄພ ຈະບໍ່ມີພັນທະໃນການສົ່ງຄືນຄ່າປະກັນໄພທີ່ຈ່າຍໄປແລ້ວນັ້ນ.

**ມາດຕາ 09: ການຄຸ້ມຄອງຂອງປະກັນ ສຸຂະພາບ.**

ໃນຂະນະທີ່ສັນຍາປະກັນໄພສະບັບນີ້ມີຜົນບັງຄັບໃຊ້ ຜູ້ປະກັນໄພຈະຈ່າຍສິນທົດແທນປະກັນ ທີ່ຢູ່ໃນພາຍໃຕ້ສັນຍາປະກັນໄພນີ້ ໃນຄ່າໃຊ້ຈ່າຍໃດໆທີ່ເກີດຂຶ້ນ, ໂດຍຫັກຄວາມຮັບຊອບ ແລະ/ຫລື ປະກັນໄພຮ່ວມ ທີ່ລະບຸໄວ້ໃນເງື່ອນໄຂ ຂອງສັນຍາປະກັນໄພ.

ຈະບໍ່ມີການຈ່າຍຜົນປະໂຫຍດ ໃຫ້ ແກ່ຄ່າໃຊ້ຈ່າຍໃດໆ ທີ່ເກີດຂຶ້ນກ່ອນວັນຄຸ້ມກັນຂອງສັນຍາ ຫລື ຫຼັງວັນທີ່ມີການຍົກເລີກສັນຍາປະກັນໄພ ເຖິງແມ່ນວ່າການໃຊ້ຈ່າຍດັ່ງກ່າວຈະເກີດຂຶ້ນ ໂດຍ ສອດຄ່ອງຕາມການຄຸ້ມຄອງທີ່ລະບຸໃນສັນຍາປະກັນໄພກໍ່ຕາມ

**ມາດຕາ 10: ການຄຸ້ມຄອງການປິ່ນປົວຄົນເຈັບນອນໂຮງໝໍ ຫລື ຜູ້ປ່ວຍໃນ.**

10.1 **ຄ່າຫ້ອງ ແລະ ອາຫານ.**

ບໍລິສັດປະກັນໄພຈະຈ່າຍຄ່າຫ້ອງ ແລະ ຄ່າອາຫານສຳລັບການບາດເຈັບ ຫລື ການເຈັບເປັນແຕ່ລະຄັ້ງບໍ່ເກີນມູນຄ່າເງິນທີ່ຕ້ອງຈ່າຍຕົວຈິງ ຫລື ມູນຄ່າເງິນຈຳກັດ ຕໍ່ວັນ ຫລື ຜົນປະໂຫຍດ ດັ່ງທີ່ກຳນົດໄວ້ໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ. ໃນກໍລະນີ, ຜູ້ໄດ້ຮັບການປະກັນໄພ ມີຄວາມຈຳເປັນທາງການແພດເຂົ້າປິ່ນປົວໃນຫ້ອງຄົນເຈັບໜັກ **(ICU)**, ຜົນປະໂຫຍດຄ່າຫ້ອງ ແມ່ນໃຫ້ຄິດໄລ່ເພີ່ມສອງເທົ່າ ຂອງຫ້ອງທຳມະດາ ແຕ່ຈະບໍ່ເກີນ 7 ວັນ;

10.2 **ຄ່າໃຊ້ຈ່າຍທົ່ວໄປໃນໂຮງໝໍ.**

ບໍລິສັດປະກັນໄພ ກຳນົດຄ່າໃຊ້ຈ່າຍທົ່ວໄປ ພາຍໃນໂຮງໝໍ ດັ່ງລຸ່ມນີ້:

- ຄ່າຢາ ທີ່ສອດຄ່ອງກັບພະຍາດ ຫລື ການເຈັບປ່ວຍ ແລະ ມີໃບສັ່ງແພດທີ່ກ່ຽວຂ້ອງ;



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

- ຄ່າຫ້ອງຜ່າຕັດ ແລະ ອຸປະກອນການຜ່າຕັດ, ຄ່າຊ່ອງລັງສີ, ຄ່າວິໄຈ, ຄ່າໃຫ້ເລືອດ, ຄ່າກາຍະພາບບໍາບັດ;
- ຄ່າວາງຢາສະຫຼົບ ແລະ ຄ່າບໍລິການຕ່າງໆໃນການວາງຢາສະຫຼົບ
- ຄ່າລົດໂຮງໝໍ
- ຄ່າປຶກສາແພດພິເສດ

  ບໍລິສັດປະກັນໄພ ຈະຈ່າຍສິນທົດແທນນີ້ ສໍາລັບການບາດເຈັບ ຫລື ການເຈັບເປັນ ແຕ່ລະຄັ້ງ ບໍ່ເກີນມູນຄ່າເງິນ ທີ່ຕ້ອງຈ່າຍຕົວຈິງ ຫລື ຜົນປະໂຫຍດສູງສຸດ ຕາມທີ່ກໍານົດໄວ້ໃນເງື່ອນໄຂສະເພາະ ຂອງສັນຍາປະກັນໄພນັ້ນໆ.

10.3 **ການປິ່ນປົວສຸກເສີນຈາກອຸປະຕິເຫດ.**

ບໍລິສັດປະກັນໄພ ຈະຈ່າຍຄ່າປິ່ນປົວສຸກເສີນໃນຮູບແບບຄົນເຈັບເຂດນອກ. ແຕ່ບໍ່ເກີນວົງເງິນຕົວຈິງ ຫລື ໃນວົງເງິນສູງສຸດຕໍ່ອຸປະຕິເຫດ ທີ່ກໍານົດໄວ້ໃນເງື່ອນໄຂສະເພາະ ຂອງສັນຍາປະກັນໄພ

10.4 **ຄ່າຊົດເຊີຍລາຍວັນຜູ້ປ່ວຍໃນ**

**ມາດຕາ 11: ຄ່າມືແພດຜ່າຕັດ**

ຄ່າມືແພດຜ່າຕັດ ແມ່ນອີງຕາມສ່ວນຮ້ອຍຂອງແຕ່ລະຊະນິດຂອງການຜ່າຕັດຕາມຕາຕະລາງ ຄ່າມືແພດຜ່າຕັດ ໃນກໍລະນີທີ່ໄດ້ມີການຜ່າຕັດຫຼາຍກວ່າໜຶ່ງພະຍາດໃນການຜ່າຕັດຄັ້ງດຽວກັນ, ການຄຸ້ມຄອງທີ່ຮັບຜິດຊອບຈະບໍ່ຫຼາຍກວ່າການຜ່າຕັດໜຶ່ງຄັ້ງ, ໂດຍຈະໄດ້ນໍາເອົາຄ່າມືແພດຜ່າຕັດອັນທີ່ສູງກວ່າມາເປັນພື້ນຖານການຄິດໄລ່ສໍາລັບຄ່າມືແພດຜ່າຕັດຄັ້ງນັ້ນ,ລາຍການຜ່າຕັດໃດທີ່ບໍ່ມີຢູ່ໃນລາຍການຂອງຕາຕະລາງຄ່າມືແພດຜ່າຕັດ ຈະຖືກທົດແທນດ້ວຍຈໍານວນເງິນທີ່ເໝາະສົມ

**ມາດຕາ 12: ການຄຸ້ມຄອງຈາກການປິ່ນປົວຄົນເຈັບເຂດນອກ ແລະ ສຸກເສີນ.**

ບໍລິສັດປະກັນໄພ ຈະຈ່າຍສິນທົດແທນໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ສໍາລັບການບາດເຈັບ ຫລື ການເຈັບເປັນ ດັ່ງຕໍ່ໄປນີ້:

- ທີ່ໂຮງໝໍ ຫລື ຄລີນິກ;
- ພະແນກຄົນເຈັບເຂດນອກ ຂອງໂຮງໝໍ.

ບໍລິສັດປະກັນໄພ ຈະຈ່າຍສິນທົດແທນສໍາລັບການບາດເຈັບ ຫລື ການເຈັບເປັນແຕ່ລະຄັ້ງ ບໍ່ເກີນມູນຄ່າເງິນທີ່ຕ້ອງຈ່າຍຕົວຈິງ ຫລື ຂອບເຂດວົງເງິນຕໍ່ວັນ ຫລື ຜົນປະໂຫຍດສູງສຸດ ຕໍ່ການໄປພົບແພດໜຶ່ງຄັ້ງ.

**ມາດຕາ 13: ຂໍ້ຍົກເວັ້ນ**

ພະຍາດທີ່ເກີດມີຢູ່ກ່ອນໃດໆ ທີ່ຜູ້ໄດ້ຮັບປະກັນໄພ ມີຢູ່ແລ້ວກ່ອນມື້ທີ່ເຮັດສັນຍາປະກັນໄພ ຫລື ມື້ຕໍ່ສັນຍາໃດໆ ແມ່ນຈະບໍ່ໄດ້ຮັບການຄຸ້ມຄອງ ຍົກເວັ້ນແຕ່ວ່າ ຜູ້ໄດ້ຮັບການປະກັນໄພຈະແຈ້ງໃນສັນຍາປະກັນໄພ ຫລື ມື້ຕໍ່ສັນຍາປະກັນໄພ ທີ່ໄດ້ຮັບການຍອມຮັບຈາກ ບໍລິສັດປະກັນໄພເທົ່ານັ້ນ.

ສັນຍາປະກັນໄພນີ້ແມ່ນຈະບໍ່ໄດ້ຮັບການຄຸ້ມຄອງຕໍ່ການຮຽກຮ້ອງໃດໆ ທີ່ເກີດຂຶ້ນ ບໍ່ວ່າທາງກົງ ຫລື ທາງອ້ອມ ອັນເປັນຜົນໃດໆມາຈາກຂໍ້ມູນຕ່າງໆດັ່ງລຸ່ມນີ້ ເຖິງແມ່ນວ່າຈະມີການແຈ້ງ ຈາກຜູ້ໄດ້ຮັບປະກັນໄພກໍ່ຕາມ:

**(ກ)** ເຂົ້າຮັບການປິ່ນປົວ ຫລື ຄຼີນິກກ່ອນ ມື້ທີ່ໄດ້ລະບຸໃນສັນຍາປະກັນໄພ

**(ຂ)** ການທົດລອງ ຫລື ວິທີການຜ່າຕັດທີ່ບໍ່ໄດ້ຮັບການຮັບຮອງ ແລະ ອານຸຍາດຈາກ ທາງການແພດ

**(ຄ)** ການຮັກສາທີ່ກ່ຽວຂ້ອງກັບ ການບົກພ່ອງຂອງຮ່າງກາຍທີ່ເປັນມາແຕ່ເກີດ ຫລື ໂລກກໍາມະພັນ

**(ງ)** ການຮັກສາທີ່ເກີດຂຶ້ນຈາກການເກີດລູກ ການຫຼຸລູກ ແລະ ການເຮັດຫມັນ

**(ຈ)** ການຮັກສາທີ່ກ່ຽວຂ້ອງກັບການມີບຸດຍາກ, ການເຊື່ອມສະມັດຕະພາບທາງເພດ, ການອ່ອນແອຈາກການຄຸມກໍາເນີດ

**(ສ)** ການຮັກສາທີ່ເກີດມາຈາກບໍ່ວ່າຈະເປັນທາງກົງ ຫລື ທາງອ້ອມ ໃນການຂ້າຕົວຕາຍ, ການພະຍາຍາມຂ້າຕົວຕາຍ ຫລື ທໍາຮ້າຍຮ່າງກາຍຕົນເອງ ການຕິດເຫຼົ້າຊໍ້າເຮື້ອ, ການໃຊ້ຕິດຢາເສບຕິດ



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

**(ຊ)** ການຮັກສາຕໍ່ອາການ ເຈັບປ່ວຍ ຫລື ບາດເຈັບ ທີ່ເກີດຈາກກິດຈະກຳທີ່ອັນຕະລາຍ ຫລື ຈາກການແຂ່ງຂັນກິລາ ທີ່ເປັນອາຊີບ ຫລື ກິລາທີ່ໄດ້ຮັບຄ່າຕອບແທນເປັນລາຍໄດ້

**(ຍ)** ການຮັກສາທີ່ເປັນຜົນມາຈາກໂລກຕິດຕໍ່ທາງເພດສຳພັນໃດໆ ລວມເຖິງໂລກພູມຄຸ້ມກັນບົກພ່ອງ ຫລື ໂລດເອດ (**HIV**) ແລະ ພາວະແຊກຊ້ອນທີ່ເກີດຈາກໂລກເອດ. ໂດຍມີຂໍ້ກຳນົດດັ່ງລຸ່ມນີ້:

(ຍ.1). ຄຳນິຍາມຂອງໂລກເອດແມ່ນຖືກໃຊ້ຈາກອົງການອະນາໄມໂລກ 1987, ຫລື ການແກ້ໄຂໃດໆ ທີ່ຕາມມາຂອງຄຳນິຍາມໂດຍອົງການອານະໄມໂລກ

(ຍ.2). ການຕິດເຊື້ອເອດ ຈະຖືວ່າເກີດຂຶ້ນເມື່ອເລືອດຕິດໄວລັດດັ່ງກ່າວ ຫລື ການກວດສອບອື່ນໆ ທີ່ກ່ຽວຂ້ອງທີ່ລະບຸໃນຄຳເຫັນຂອງຄຳເຫັນຂອງທາງບໍລິສັດປະກັນໄພ ບໍ່ວ່າຈະລະບຸວ່າຜູ້ຕິດພະຍາດໂລກເອດ ຫລື ຖືເຊື້ອເອດ

**(ດ)** ການຮັກສາທີ່ກ່ຽວກັບ ໂລກປະສາດ ຫລື ໂລກຈິດ

**(ຕ)** ການຮັກສາທີ່ກ່ຽວກັບໂລກອ້ວນ ຫລື ການລົດນ້ຳຫນັກ

**(ຖ)** ການຮັກສາ ທີ່ເກີດຂຶ້ນບໍ່ວ່າທາງກົງ ຫລື ທາງອ້ອມ ໂດຍ ສົງຄາມ (ຈະປະກາດ ຫລື ບໍ່ປະກາດກໍຕາມ) ການຮຸກຮານ ຫລື ການກະທຳຂອງສັດຕູຕ່າງຊາດ, ສົງຄາມກາງເມືອງ, ການປະຕິວັດ, ການກໍ່ການກະບົດ, ກໍ່ການຈາລະຈົນ, ການນັດຢຸດງານ, ການກໍ່ຄວາມວຸ້ນວາຍເຖິງຂັ້ນລຸກຮື້ຂຶ້ນຕ້ານລັດຖະບານ

**(ທ)** ການຊື້ ຫລື ໃຫ້ເຊົ່າ ໃນການນຳໃຊ້ເຄື່ອງມືພິເສດໃນການປິ່ນປົວໃນທີ່ພັກອາໃສ ຂອງຜູ້ປ່ວຍນອກ (ລວມທັງສະຖານທີ່, ຂົນສົ່ງ ແລະ ຄ່າໃຊ້ຈ່າຍໃນການບໍລິການເຄື່ອງໃຊ້ດັ່ງກ່າວ) ທີ່ບໍ່ຈຳເປັນໃນການດຳເນີນການຜ່າຕັດ, ອຸປະກອນທຽມທາງການແພດທີ່ໃຊ້ເພື່ອທົດແທນອະໄວຍະວະຕ່າງໆ ເຄື່ອງຫັດຕ່າງໆ(ຫັດແຂ້ວ ແລະ ອື່ນໆ), ຂາທຽມ. ອຸປະກອນ ຫລື ເຄື່ອງຈັກອຳນວຍຄວາມສະດວກທາງການແພດ ເຊັ່ນ: ລົດເຂັນ, ອຸປະກອນຊ່ວຍຫັດຍ່າງ, ເຄື່ອງປະຖົມຕ່າງໆໃນບ້ານ, ເຄື່ອງລ້າງໄຕ, ເຄື່ອງຈັກຫາຍໃຈທຽມ, ເຄື່ອງອອັກຊີເຈັນ, ຕຽງນອນທີ່ໃຊ້ໃນໂຮງຫມໍ ແລະ ເຄື່ອງໃຊ້ທາງການແພດອື່ນໆ.

**(ນ)** ການຮັກສາໃດໆ ທີ່ກ່ຽວກັບແຂ້ວ, ການສັນຍະກຳຄວາມງາມ ຫລື ຜ່າຕັດທຽມ (ຍົກເວັ້ນຄວາມຈຳເປັນທີ່ຈະຕ້ອງໄດ້ຜ່າຕັດເພື່ອປົກປົດຈາກອາການບາດເຈັບ ຫລື ພະຍາດທີ່ເກີດຂຶ້ນພາຍໃນ 365 ວັນ ນັບຈາກການເກີດອຸບັດຕິເຫດ ຫລື ການຜ່າຕັດຕົບແຕ່ງຫນ້າເອິກຫຼັງຈາກການຜ່າຕັດປິ່ນປົວມະເລັງເຕົ້ານົມ) ແລະ ການປິ່ນປົວເພື່ອແກ້ໄຂຂອງສາຍຕາໃນກໍລະນີເກີດມີການບາດເຈັບ ຈົນເຮັດໃຫ້ມີບັນຫາໃນການມອງເຫັນຂອງສາຍຕາ.

**(ບ)** ຄ່າໃຊ້ຈ່າຍສຳຫຼັບການກວດກາສາຍຕາ ແລະ ຫູ ທີ່ເປັນປະຈຳ , ລວມໄປເຖິງຄ່າໃຊ້ຈ່າຍຂອງຄອນແທັກເລັນ ແລະ ເຄື່ອງຊ່ວຍຟັງ.

**(ປ)** ຄ່າບໍລິການ ພະຍາບານ ແລະ ການບໍລິການ ທີ່ພັກເພື່ອຮັກສາພະຍາບານ.

**(ຜ)** ການພັກຮັກສາ ແລະ ດູແລ ທີ່ບ້ານພັກຮັບຮອງ ຫລື ພະຍາບານ ສຳຫຼັບຜູ້ປ່ວຍນອກ, ການດູແລ ບຳບັດ ໃນສູນບຳບັດ ຫລື ທີ່ພັກຮັກສາພະຍາບານ, ການຮັກສາຕົວ ຫລື ການຟື້ນຟູ ຫລື ສູນບຳບັດຜູ້ປ່ວຍນອກເຊັ່ນ ຄ່າປຶກສາໃນການຟື້ນຟູ ແລະ ກາຍຍະພາບ.

**(ພ)** ການບໍລິການທີ່ກ່ຽວກັບການຂົນສົ່ງສຸກເສີນ, ການຍົກຍ້າຍສຸກເສີນ, ການຍົກຍ້າຍສຸກເສີນ, ການຊ່ວຍເຫລືອໃນການເດີນທາງ ແລະ ການສົ່ງຂົນສົ່ງສົບກັບຄືນບ້ານ, ເວັ້ນເສຍແຕ່ວ່າ ໄດ້ລະບຸໃນ ການຄຸ້ມຄອງທົ່ວໄປ ພາຍໃຕ້ສັນຍາປະກັນໄພ ສະບັບນີ້

**(ຟ)** ຄ່າບໍລິການໃຫ້ຄຳປຶກສາ ສຳລັບຜູ້ປ່ວຍນອກ ລວມເຖິງການກວດວິນິໄສ, ການທົດລອງໃນຫ້ອງປະຕິບັດການແພດ ແລະ ການຮັກສາ, ຍົກເວັ້ນແຕ່ໄດ້ຮັບການຄຸ້ມຄອງໂດຍຈະແຈ້ງພາຍໃຕ້ສັນຍາປະກັນໄພນີ້

**(ມ)** ການສັກຢາວັນຊີນ

**(ຢ)** ຄ່າໃຊ້ຈ່າຍທີ່ບໍ່ແມ່ນກ່ຽວກັບການແພດໂດຍກົງ ແຕ່ບໍ່ຈຳກັດ ເຊັ່ນ: ຄ່າຈອດລົດ, ຄ່າບໍລິຫານທາງໂຮງຫມໍການລົງທະບຽນ,ຄ່າຊັກເຄື່ອງ, ຄ່າເຊົ່າໂທລະທັດ, ຄ່າຊື້ຫນັງສືພິມ ແລະ ຄ່າລາຍງານທາງການແພດ



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

(ລ) ການຮັກສາທາງເລືອກ ຫລື ການຮັກສາທາງແຜນແພດຈີນ, ການບຳບັດຝາຕີນເພື່ອປິ່ນປົວພະຍາດ (Podiatric), ການນວດຈັດກະດູກ (Chiropractic), ການນວດ ດຶງ ຢືດ ກ້າມຊີ້ນ ແລະ ຂໍ້ກະດູກ (Osteopathic) ຫລື ການເຂົ້າຮັກສາທີ່ບໍ່ໄດ້ຮັບການຮັບຮອງຈາກແພດ

(ວ) ການຮັກສາໃນໂຮງໝໍ ເພື່ອບົ່ງມະຕິ ໃນຈຸດປະສົງເພື່ອປ້ອງກັນ, ການກວດເອັກສະເລ, ການກວດສຸຂະພາບຮ່າງກາຍທົ່ວໄປ, ຫລື

(ຫ) ການລະເມີດ ຫລື ພະຍາຍາມທີ່ຈະລະເມີດກົດໝາຍ ຫລື ຕໍ່ຕ້ານການຈັບກຸມ ຫລື ການຖືກກັກຂັງ.

**ມາດຕາ 14: ການສິ້ນສຸດຄວາມຄຸ້ມຄອງຂອງສັນຍາປະກັນໄພ.**

ສັນຍາປະກັນໄພ ຈະສິ້ນສຸດລົງໂດຍທັນທີ ເມື່ອມີເຫດການໃດໜຶ່ງເກີດຂື້ນ ດັ່ງຕໍ່ໄປນີ້:

- ສັນຍາປະກັນໄພໝົດອາຍຸ ໂດຍບໍ່ມີການຕໍ່ສັນຍາໃໝ່;
- ຜູ້ໄດ້ຮັບປະກັນໄພ ໄດ້ລະເມີດເງື່ອນໄຂ ແລະ ຂໍ້ກຳນົດຂອງສັນຍາປະກັນໄພ;
- ຜູ້ໄດ້ຮັບປະກັນໄພ ໄດ້ເສຍຊີວິດລົງ ແລະ ບໍລິສັດປະກັນໄພ ໄດ້ສົ່ງຄືນຄ່າປະກັນໄພທີ່ຍັງເຫລືອ ໃຫ້ກັບຜູ້ໄດ້ຮັບຜົນປະໂຫຍດຂອງຜູ້ກ່ຽວ ຕາມທີ່ໄດ້ກຳນົດໃນມາດຕາ 07 ໃນເງື່ອນໄຂທົ່ວໄປຂອງສັນຍາປະກັນໄສະບັບນີ້;
- ສັນຍາປະກັນໄພໄດ້ຮັບການຍົກເລີກ ໂດຍຝ່າຍໃດຝ່າຍໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 07 ໃນເງື່ອນໄຂທົ່ວໄປຂອງສັນຍາສະບັບນີ້;
- ສັນຍາປະກັນໄພເປັນໂມຄະໂດຍເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 08 ໃນເງື່ອນໄຂທົ່ວໄປຂອງສັນຍາປະກັນໄພສະບັບນີ້;
- ສານຕັດສິນ ໃຫ້ສັນຍາປະກັນໄພເປັນໂມຄະ;

| **ຊະນິດຂອງການຜ່າຕັດ** | **ລາຍການ** | **ອັດຕາສິນທົດແທນສູງສຸດ** |
|---|---|---|
| **ຜົ້ງທ້ອງ** | ▪ ການຕັດເອົາໄສ້ຕິ່ງອອກ | 50 % |
| | ▪ ການຜ່າຕັດລຳໄສ້ | 75 % |
| | ▪ ການຜ່າຕັດກະເພາະອາຫານ | 75 % |
| | ▪ ການຕໍ່ກະເພາະອາຫານ ແລະ ລຳໄສ້ | 65 % |
| | ▪ ການປາດເອົາຖົງບີອອກ | 75 % |
| | ▪ ການຜ່າຕັດບໍລິເວນທ້ອງ ເພື່ອການບົ່ງມະຕິ, ການປິ່ນປົວ ຫລື ການຜ່າຕັດເອົາໜຶ່ງ ຫລື ຫຼາຍອະໄວຍະວະທີ່ຢູ່ທາງໃນນັ້ນອອກ. ຍົກເວັ້ນອັນອື່ນ ທີ່ໄດ້ກ່າວໄວ້ໃນນັ້ນ, ການຜ່າຕັດຕັ້ງແຕ່ສອງຄັ້ງ ຫລື ຫຼາຍກ່ວານັ້ນ ກ່ຽວກັບພະຍາດອັນດຽວກັນ ໃຫ້ຖືວ່າເປັນການຜ່າຕັດຄັ້ງດຽວ | 55 % |
| **ອັບແຊ** | ▪ ການແຫກ ລະບາຍອັບແຊທີ່ຢູ່ຕື້ນ, ຝີໜອງ, ໜຶ່ງ ຫລື ຫຼາຍກວ່ານັ້ນ | 5 % |
| | ▪ ການປິ່ນປົວຝີຫຼາຍຫົວ (ຝີຮັງຕໍ່) ຫລື ອັບແຊ ພ້ອມນອນໂຮງໝໍ | 12 % |
| **ການຕັດກຸດ** | ▪ ນີ້ວມື ຫລື ນີ້ວຕີນ ແຕ່ລະນີ້ວ | 7 % |
| | ▪ ມື, ປາຍແຂນ ຫລື ຕີນຮອດຂໍ່ຕີນ | 30 % |
| | ▪ ແຂ່ງ, ແຂນ ຫລື ກົກຂາ | 50 % |
| | ▪ ກົກຂາ ຮອດກະໂພກ | 75 % |
| | ▪ ການຕັດເຄິ່ງໂຕທາງລຸ່ມອອກໝົດ | 100 % |
| **ນົມ** | ▪ ການຜ່າຕັດເອົານົມເບື້ອງໜຶ່ງ ຫລື ສອງເບື້ອງອອກໝົດ ຫລື ການຜ່າຕັດເຂົ້າຫາກ້ອງຂີ້ແຮ້ | 85 % |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| | ▪ ການຜ່າຕັດເອົານົມເບື້ອງໜຶ່ງ ຫລື ສອງບື້ອງອອກ ແບບທຳມະດາ | 67 % |
| **ຜົ້ງເອິກ** | ▪ ການຜ່າຕັດແປງຜົ້ງເອິກຢ່າງຄົບຖ້ວນ | 100 % |
| | ▪ ການຜ່າຕັດເອົາປອດອອກທັງໝົດ | 100 % |
| | ▪ ການຜ່າຕັດເອົາປອດ ຫລື ພາກສ່ວນໜຶ່ງຂອງປອດອອກ | 90 % |
| | ▪ ການຜ່າເຂົ້າໄປໃນຜົ້ງເອິກເພື່ອການບົ່ງມະຕິ ຫລື ການປິ່ນປົວອະໄວຍະວະພາຍໃນໃດໜຶ່ງທີ່ຢູ່ຂ້າງໃນ. ຍົກເວັ້ນການບົ່ງດູດ | 50 % |
| | ▪ ການລະບາຍໜອງອອກ ຍົກເວັ້ນການບົ່ງດູດ | 12 % |
| | ▪ ການເຮັດໃຫ້ມີລົມຢູ່ຜົ້ງເອິກເອງ | 12 % |
| | ▪ ການບັນຈຸແຕ່ລະຂ້າງ ແຕ່ຕ້ອງບໍ່ເກີນ 6 ຄັ້ງ | 2 % |
| | ▪ ການບົ່ງມະຕິດ້ວຍການຊ່ອງເບິ່ງຫຼອດປອດ | 20 % |
| | ▪ ການຜ່າຕັດ, ຍົກເວັ້ນເອົາຊິ້ນສ່ວນນ້ອຍໆໄປກວດ | 50 % |
| **ຫູ** | ▪ ການຜ່າຕັດເຈ້ຍຫູ | 10 % |
| | ▪ ການຜ່າຕັດມັສຕອຍ ທັງໝົດຂ້າງດຽວ | 55 % |
| | ▪ ການຜ່າຕັດມັສຕອຍ ທັງໝົດສອງຂ້າງ | 80 % |
| | ▪ ການຜ່າຕັດເພື່ອໃຫ້ໄດ້ຍິນສຽງ ຂ້າງດຽວ ຫລື ທັງສອງຂ້າງ | 100 % |
| | ▪ ການຜ່າຕັດກ່ຽວກັບກະດູກກົ້ນໃນຫູສ່ວນກາງ (Stapedotomy) | 50 % |
| **ຫຼອດອາຫານ** | ▪ ການຜ່າຕັດຫຼອດອາຫານຕີບ | 40 % |
| | ▪ ການໃຊ້ກ້ອງສ່ອງກະເພາະອາຫານ | 25 % |
| **ຕາ** | ▪ ການເອົາວັດຖຸນອກຕາອອກ, ອອກຈາກແກ້ວຕາ | 5 % |
| | ▪ ຈໍຣັບພາບຫຼຸດອອກ | 100 % |
| | ▪ ແກ່ນຕາຂຸ້ນ | 60 % |
| | ▪ ຕາກະດັນ | 45 % |
| | ▪ ການເອົາໜ່ວຍຕາອອກ | 45 % |
| | ▪ ການຕັດເອົາຊີ້ນປິ່ງອອກ | 30 % |
| | ▪ ການແທກ, ລະບາຍຕາ, ຕາຕໍ້, ຕາຕອນ | 10 % |
| **ກະດູກຫັກ** | ▪ ການປິ່ນປົວກະດູກໄມ້ຄານແບບທຳມະດາ, ກະດູກເອື້ອງ ຫລື ກະດູກປາຍແຂນ ໜຶ່ງກະດູກ | 25 % |
| | ▪ ກະດູກກົ້ນສຸດ ກະດູກຕີນ, ກະດູກປາຍຕີນ ຫລື ກະດູກສົ້ນນ່ອງ | 25 % |
| | ▪ ກົກຂາ | 55 % |
| | ▪ ພາກສ່ວນເທິງຂອງກະດູກກົກແຂນ ຫລື ແຂ່ງ ໜຶ່ງ ກະດູກ | 40 % |
| | ▪ ນິ້ວຕີນ ແຕ່ລະນິ້ວ ຫລື ກະດູກຂ້າງ | 15 % |
| | ▪ ສອງກະດູກປາຍແຂນ, ໝາກບ້າກຫົວເຂົ່າ, ກະດູກຊາມ ໂດຍບໍ່ໄດ້ດຶງ. | 60 % |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| | ▪ ສອງກະດູກແຂ່ງ | 50 % |
| | ▪ ກະດູກຄາງກະໄຕລຸ່ມ | 35 % |
| | ▪ ກະດູກມື, ກະດູກປາຍມື, ດັງ, ກະດູກຂ້າງສອງທ່ອນ ຫລື ຫຼາຍກ່ວານັ້ນ ຫລື ກະດູກໜ້າເອິກ | 25 % |
| | ▪ ກະດູກຊາມໄຫຼ່ດຶງ | 31 % |
| | ▪ ກະດູກສັນຫຼັງ, ກະດູກສັນຫຼັງທ່ອນຂວາງ ແຕ່ລະອັນ | 20 % |
| | ▪ ກະດູກສັນຫຼັງ ການຫັກດ້ວຍການໜີບເຕັງ ໜຶ່ງ ຫລື ຫຼາຍ | 50 % |
| | ▪ ຂໍ່ມື | 30 % |
| **ການແຕກຫັກ ຫລື ຫັກຫຼາຍປ່ຽງ:** | ▪ ສຳລັບ, ການແຕກຫັກເປີດ ຫລື ຫັກຫຼາຍປ່ຽງໃຫ້ເພີ່ມຜົນປະໂຫຍດຂ້າງເທິງນີ້ອີກ | 95 % |
| | ▪ ສຳລັບ, ການແຕກຫັກ ຊຶ່ງຕ້ອງຜ່າຕັດທີ່ກ່ຽວກັບກະດູກໃຫ້ເພີ່ມຜົນປະໂຫຍດຂ້າງເທິງນີ້ອີກ. | 100 % |
| **ລະບົບທາງເດີນປັດສະວະ ແລະ ລະບົບສືບພັນ:** | ▪ ການຜ່າຕັດເອົາໝາກໄຂ່ຫຼັງອອກ | 75 % |
| | ▪ ການເອົາໝາກໄຂ່ຫຼັງເຂົ້າທີ່ | 75 % |
| | ▪ ການຜ່າຕັດເອົາກ້ອນເບົ້າອອກ, ຫນີ້ວໃນໝາກໄຂ່ຫຼັງ, ທໍ່ຍ່ຽວ ຫລື ພົກຍ່ຽວ | 75 % |
| | ▪ ການຈູດໂດຍໃຊ້ເຄື່ອງຊ່ອງເຂົ້າໄປໃນ | 35 % |
| | ▪ ທໍ່ຍ່ຽວຕີບ ດ້ວຍການຜ່າຕັດ | 50 % |
| | ▪ ການຜ່າຕັດເຂົ້າໄປໃນທໍ່ຍ່ຽວ | 20 % |
| | ▪ ການຜ່າຕັດລູກໝາກອອກດ້ວຍວິທີການຄົບຖ້ວນ | 75 % |
| | ▪ ການຜ່າຕັດເອົາຕ່ອມລູກໝາກອອກເປັນພາກສ່ວນ ດ້ວຍເຄື່ອງຊ່ອງເຂົ້າໄປຂ້າງໃນ ດ້ວຍວິທີຜ່າຕັດອື່ນໆ | 60 % |
| | ▪ ການຜ່າຕັດເອົາແກ່ນອັນທະອອກ, ການຜ່າຕັດເອົາຫມວກປົກແກ່ນອັນທະອອກ | 37 % |
| | ▪ ຖົງຫຳຊຶມນ້ຳ, ເສັ້ນເລືອດດຳຕີ່ງເປັນຖົງ | 37 % |
| | ▪ ການຜ່າຕັດມົດລູກອອກໝົດ ສຳລັບມະເຮັງ | 100 % |
| | ▪ ການຜ່າຕັດລູກນອກພົກ | 60 % |
| | ▪ ການຜ່າຕັດມົດລູກອອກ ພ້ອມທັງເອົາຮວຍໄຂ່, ທໍ່ສົ່ງໄຂ່ (ປີກມົດລູກ) ແລະ ເອົາ ຫລື ບໍ່ເອົາໄສ້ຕີ່ງອອກ | 70 % |
| | ▪ ການຂູດ ຫລື ການຈູດປາກມົດລູກ ທີ່ບໍ່ກ່ຽວກັບການຖືພາ | 10 % |
| | ▪ ການຍະ ແລະ ຂູດມົດລູກ ທີ່ບໍ່ກ່ຽວກັບການຖືພາ | 20 % |
| | ▪ ການປາດແປງອ້ອມຮູທະວານ ຫລື ຊ່ອງຄອດຈີກຂາດ ບໍ່ເຮັດທັນໃດໂລດພາຍຫຼັງການເກີດລູກ ລວມເອົາການມີພົກຍ່ຽວຢ່ອນເປັນຖົງ ແລະໃສ້ແກ່ທ່ອນສຸດຢ່ອນເປັນຖົງ | 37 % |
| | ▪ ການຕັດເອົາກ້ອນເບົ້າທີ່ຄ້າຍຄືໃຍອອກໂດຍບໍ່ທຳການຜ່າຕັດເຂົ້າໄປໃນໜ້າທ້ອງ | 30 % |
| | ▪ ຄໍໜຽງ - ການຕັດເອົາຄໍໜຽງອອກ, ລວມທຸກຂັ້ນຂອງວິທີການຜ່າຕັດ | 75 % |
| | ▪ ອະໄວຍະວະຫຼອດ- ການປິ່ນປົວດ້ວຍການສັກ, ວິທີການຄົບຖ້ວນ ສຳລັບ ອະໄວຍະວະຫຼອດທຳມະດາ | 45 % |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| | ▪ ອະໄວຍະວະຫຼອດ- ການປິ່ນປົວດ້ວຍການສັກ, ວິທີການຄີບຖ້ວນ ສໍາລັບ ອະໄວຍະວະຫຼອດເປັນຄູ່ | 45 % |
| | ▪ ການຜ່າຕັດອອກໝົດ ລວມທັງການປິ່ນປົວດ້ວຍການສັກ ສໍາລັບ ອະໄວຍະວະຫຼອດທໍາມະດາ | 45 % |
| | ▪ ການຜ່າຕັດອອກໝົດ ລວມທັງການປິ່ນປົວດ້ວຍການສັກ ສໍາລັບ ອະໄວຍະວະຫຼອດເປັນຄູ່ | 65 % |
| ຂໍ່ ແລະ ການຫຼູດໂບກຂອງຂໍ່ (ສໍາລັບ, ການຫຼູດໂບກ ຊຶ່ງຈໍາ ເປັນຕ້ອງໄດ້ຜ່າຕັດ ກ່ອນ ແມ່ນໃຫ້ເພີ່ມຂຶ້ນ ອີກທົບເທົ່າຂອງອັດຕາສິນ ທົດແທນທີ່ກໍານົດໄວ້ໃນ ລາຍການຂ້າງເທິງນີ້) | ▪ ການແທກເຂົ້າໄປໃນຂໍ່ ສໍາລັບພະຍາດ ແລະ ການຜິດປົກະຕິ ຍົກເວັ້ນທີ່ໄດ້ກ່າວມາຂ້າງໃນ ແລະ ຍົກເວັ້ນການບົ່ງດູດ | 25 % |
| | ▪ ການແທກເຂົ້າໄປໃນບ່າໄຫຼ່, ສອກ, ສະໂພກ, ຫົວເຂົ່າຍົກເວັ້ນການບົ່ງດູດ | 37 % |
| | ▪ ການແທກ, ຜ່າຕັດເອົາຂໍ່ເຂົ້າທີ່ເດີມ(ແປງຂໍ່), ການຜ່າຕັດເຮັດໃຫ້ຂໍ່ແຂງ, ບ່າໄຫຼ່, ກະໂພກ ຫລື ກະດູກສັນຫຼັງ | 95 % |
| | ▪ ຫົວເຂົ່າ, ຂໍ່ສອກ, ຂໍ່ມື ຫລື ຂໍ່ຕີນ | 50 % |
| | ▪ ການຫຼູດໂບກຂອງນິ້ວມື ຫລື ນິ້ວຕີນ ແຕ່ລະນີ້ວ | 5 % |
| | ▪ ບ່າໄຫຼ່, ສອກ, ຂໍ່ມື ຫລື ຂໍ່ຕີນ | 20 % |
| | ▪ ກະດູກຄາງກະໄຕ | 10 % |
| | ▪ ຂໍ່ກະໂພກ | 70 % |
| | ▪ ຫົວເຂົ່າ (ຍົກເວັ້ນໝາກບ້າຫົວເຂົ່າ) | 30 % |
| | ▪ ໝາກບ້າຫົວເຂົ່າ | 15 % |
| ດັງ | ▪ ການຜ່າຕັດດັງ | 5 % |
| | ▪ ການຜ່າຕັດຜົ້ງດັງ ໂດຍທາງນອກດັງ | 20 % |
| | ▪ ການຜ່າຕັດຜົ້ງດັງ ໂດຍຜ່ານເຂົ້າທາງໃນດັງ | 40 % |
| | ▪ ການຜ່າຕັດເອົາຕິ່ງທາງໃນດັງອອກ, ໜຶ່ງ ຫລື ຫຼາຍອັນ | 30 % |
| | ▪ ການຜ່າຕັດກ້ອງເຫຍື່ອເມືອກ | 30 % |
| | ▪ TURBINECTOMY (ການຜ່າຕັດເອົາ Turbin ໃນດັງອອກ) | 15 % |
| ການບົ່ງດູດ | ▪ ການບົ່ງດູດທ້ອງ | 12 % |
| | ▪ ຜົ້ງເອິກ ຫລື ພົກຍ່ຽວ ຍົກເວັ້ນການແຍ່ສາຍສວນຍ່ຽວ | 7 % |
| | ▪ ເຈົ້ຍຫູ, ຖົງຫໍາຊຶມນໍ້າ, ຂໍ່ ຫລື ກະດູກສັນຫຼັງ | 7 % |
| ໃສ້ແກ່ທ່ອນສຸດ | ▪ ການຜ່າຕັດອອກໝົດສໍາລັບມະເຮັງທຸກໄລຍະ ລວມທັງການເອົາລໍາໃສ້ອອກມາເປັນຮູອາຈົມໃໝ່ | 100 % |
| | ▪ ລິດສະດວງທະວານນອກ ການເອົາອອກໝົດ | 15 % |
| | ▪ ລິດສະດວງທະວານໃນ ຫລື ນອກ ລວມທັງໃສ້ແກ່ທ່ອນສຸດຍ່ອນ, ເອົາອອກໝົດ ຫລື ປິ່ນປົວດ້ວຍການສັກຢາຄີບຖ້ວນ | 40 % |
| | ▪ ຮູຊຶມຢູ່ຮູທະວານ | 40 % |
| | ▪ ຮອຍແຫງຢູ່ຮູທະວານ | 15 % |
| | ▪ ການຜ່າຕັດລໍາໃສ້ແກ່ທ່ອນສຸດອື່ນໆ | 30 % |
| ກະໂຫຼກຫົວ | ▪ ການຜ່າຕັດກະໂຫຼກຫົວ, ການເຈາະກະໂຫຼກຫົວ ຍົກເວັ້ນການບົ່ງດູດ | 100 % |



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| | ▪ ການເອົາປ່ຽງກະໂຫຼກຫົວ ທີ່ເຈາະອອກ ຫລື ເພື່ອແກ້ໄຂການໜີບເຕັງ | 50 % |
| ຄໍ | ▪ ການຜ່າຕັດເອົາຕ່ອມອາມິດານອອກ ຫລື ເອົາທັງຕ່ອມກະດັນອອກ | 35 % |
| | ▪ ການໃຊ້ເຄື່ອງຊ່ອງເບິ່ງຄໍເພື່ອການບົ່ງມະຕິ | 20 % |
| ກ້ອນເນື້ອ (ເນື້ອງອກ) (ໃນກໍລະນີທີ່ມີການປິ່ນປົວດ້ວຍແສງລັງສີ (x) ຫລື ທາດຣາດີອອມ (Radium), ສຳລັບ ບໍ່ວ່າເນື້ອງອກຊະນິດໃດ ທີ່ໄດ້ກ່າວໄວ້ໃນຂ້າງເທິງການທົດແທນສູງສຸດ ສາມາດຈ່າຍໃຫ້ ສຳລັບ ການປິ່ນປົວຢ່າງເຕັມສ່ວນລວມທັງການຜ່າຕັດນັ້ນໆ) | ▪ ການຜ່າຕັດເນື້ອງອກຊະນິດຮ້າຍແຮງ ຍົກເວັ້ນເນື້ອງອກຊັ້ນເຍື່ອເມືອກ, ຜິວໜັງ ແລະ ແຜຈຸລັງກ້ອງໜັງ | 85 % |
| | ▪ ເນື້ອງອກຊະນິດຮ້າຍແຮງຂອງຊັ້ນເຍື່ອເມືອກ, ຜິວໜັງ ແລະ ແຜຈຸລັງກ້ອງໜັງ | 45 % |
| | ▪ ການຜ່າຕັດເນື້ອງອກຊະນິດ POLONIDAL SINUS ຫລື ກ້ອນເນື້ອຖົງນ້ຳ ຊະນິດດັ່ງກ່າວ | 25 % |
| | ▪ ເນື້ອງອກຊະນິດບໍ່ຮ້າຍແຮງຂອງແກ່ນອັນທະ ຫລື ນົມ | 20 % |
| | ▪ ຕ່ອມກະດັນ (GANGLION) | 10 % |
| | ▪ ຂີ້ກະຕອດ ຫລື ໄຝ | 7 % |
| | ▪ ເນື້ອງອກຊະນິດບໍ່ຮ້າຍແຮງແຫ່ງດຽວ ຫລື ຫຼາຍແຫ່ງ ເວັ້ນເສຍແຕ່ຈະລະບຸໄວ້ໄດ້ນອນໂຮງໝໍ | 25 % |
| | ▪ ເນື້ອງອກຊະນິດບໍ່ຮ້າຍແຮງແຫ່ງດຽວ ຫລື ຫຼາຍແຫ່ງ ທີ່ບໍ່ໄດ້ນອນໂຮງໝໍ | 7 % |
| ເສັ້ນເລືອດ | ▪ ການຜ່າຕັດເສັ້ນເລືອດທຸກຢ່າງ ຫລື ການສັກຢາໃນຂາຂ້າງດຽວ | 35 % |
| | ▪ ການຜ່າຕັດເສັ້ນເລືອດທຸກຢ່າງ ຫລື ການສັກຢາໃນຂາສອງຂ້າງ | 50 % |

## ພາກທີ III ປະກັນໄພອຸປະຕິເຫດສ່ວນບຸກຄົນ

### ມາດຕາ 01: ການຄຸ້ມຄອງ

ບໍລິສັດ ໄດ້ຕົກລົງ ຕາມເງື່ອນໄຂ ແລະ ຂໍ້ກຳນົດ ທີ່ໄດ້ບັນຈຸ, ຮັບຮອງ ຫຼື ລະບຸໄວ້ ແລະ ຢູ່ໃນໄລຍະເວລາ ຂອງການປະກັນໄພ ທີ່ກຳນົດໄວ້ໃນ ມາດຕາເງື່ອນໄຂສະເພາະ ຖ້າຫາກຜູ້ທີ່ໄດ້ຮັບການປະກັນໄພ ຫາກມີການບາດເຈັບ ທີ່ເກີດຈາກຜົນຂອງອຸປະຕິເຫດ ແລະ ມີສາເຫດມາຈາກປັດໃຈພາຍນອກ ແລະ ສາມາດເບິ່ງເຫັນໄດ້ ເຊິ່ງບໍ່ຂຶ້ນກັບສາເຫດອື່ນໆ ເປັນສາເຫດດຽວ ແລະ ໂດຍກົງທີ່ກໍ່ໃຫ້ຜູ້ໄດ້ຮັບການປະກັນໄພ ເສຍຊີວິດ ຫຼື ພິການ, ບໍລິສັດ ຈະຈ່າຍທົດແທນຄືນໃຫ້ ຜູ້ໄດ້ຮັບການປະກັນໄພ ຫຼື ໃນກໍລະນີ ທີ່ຜູ້ໄດ້ຮັບການປະກັນໄພ ເສຍຊີວິດ ແມ່ນຈະຈ່າຍທົດແທນໃຫ້ຕົວແທນທີ່ຮັບສິດທາງກົດໝາຍຂອງຜູ້ທີ່ໄດ້ຮັບການປະກັນໄພ, ຜົນປະໂຫຍດນີ້ ແມ່ນໄດ້ລະບຸໃນຕາຕະລາງຜົນປະໂຫຍດ.

ໂດຍມີເງື່ອນໄຂຢູ່ສະເໜີວ່າ ໄດ້ມີການປະຕິບັດອັນເໝາະສົມ ຕາມເງື່ອນໄຂ, ຂໍ້ກຳນົດ ແລະ ສັນຍາເພີ່ມຕ່າງໆ ຂອງສັນຍາປະກັນໄພ ທີ່ທາງຜູ້ໄດ້ຮັບການປະກັນໄພຈະຕ້ອງໄດ້ເຮັດ ຫຼື ປະຕິບັດຕາມ ເຊິ່ງຈະເປັນເງື່ອນໄຂທີ່ມີມາກ່ອນຄວາມຮັບຜິດຊອບຂອງບໍລິສັດ ທີ່ຈະຕ້ອງໄດ້ຈ່າຍທົດ ແທນພາຍໃຕ້ສັນຍາສະບັບນີ້.

### ມາດຕາ 02: ຂໍ້ຍົກເວັ້ນ

ສັນຍາສະບັບນີ້ບໍ່ຄຸ້ມກັນການເສຍຊີວິດ, ພິການ, ການບາດເຈັບຂອງຮ່າງກາຍ ແລະ ການເສຍຫາຍຕ່າງໆທີ່ເກີດຈາກໂດຍທາງກົງ ແລະ ທາງອ້ອມ ຫຼື ກ່ຽວພັນກັບຂໍ້ຕ່າງໆດັ່ງລຸ່ມນີ້:

1. ການຂ້າຕົວຕາຍ ຫຼື ພະຍາຍາມຂ້າຕົວຕາຍ (ບໍ່ວ່າຈະມີສະຕິ ຫຼື ຂາດສະຕິ);
2. ການທຳຮ້າຍຕົວເອງ ຫຼື ຕັ້ງໃຈໃຫ້ຕົວເອງໄດ້ຮັບບາດເຈັບ;
3. ກໍ່ໃຫ້ເກີດມີການຄາດຕະກຳ, ທຳຮ້າຍ ຫຼື ພະຍາຍາມໃຫ້ເກີດມີການຂົ່ມຂູ່;
4. ການກະທຳຜິດ ຫຼື ພະຍາຍາມກະທຳຜິດຕໍ່ຂະບວນການທາງດ້ານກົດໝາຍ;
5. ການຊັກ, ພະຍາດ ຫຼື ອາການບົກຜ່ອງ ທາງຮ່າງກາຍ ຫຼື ຈິດໃຈທີ່ເປັນມາກ່ອນແລ້ວ;

6. ການເກີດລູກ, ລຸລູກ, ຖືພາ ຫຼື ພະຍາດແຊກຊ້ອນອື່ນໆ;
7. ການເຈັບປ່ວຍ ຫຼື ພະຍາດທີ່ລວມມີການມະເລັງ, ໂລກເອດສ໌, ໂລກຕິດເຊື້ອຈາກພະຍາດກາຝາກ, ເຊື້ອໂລກ ຫຼື ໄວຣັດ;
8. ພິດຂອງສຸລາ ຫຼື ຢາລະງັບທີ່ນຳໃຊ້ ໂດຍບໍ່ແມ່ນມາຈາກໃບສັ່ງຂອງແພດວິຊາຊີບສະໄໝໃໝ່ທີ່ໄດ້ອະນຸຍາດໃຫ້ດຳເນີນທຸລະກິດ; ຖືກຕ້ອງຕາມກົດໝາຍ ແລະ ການບໍລິການຜ່າຕັດຕ່າງໆ;
9. ກິດຈະກຳທາງອາກາດ ຫຼື ການເດີນທາງ ທາງອາກາດ (ອື່ນໆນອກຈາກການເປັນຜູ້ໂດຍສານ ທີ່ໄດ້ຈ່າຍຄ່າເດີນທາງ ໃນການເດີນທາງທາງເຮລິຄອບເຕີ ຫຼື ເຄື່ອງບິນ ທີ່ດຳເນີນການ ໂດຍສາຍການບິນທີ່ໄດ້ຈົດທະບຽນ ການບິນຕາມເສັ້ນທາງປົກກະຕິ ລະຫວ່າງສະໜາມບິນທີ່ໄດ້ຮັບການສ້າງ ແລະ ບຳລຸງຮັກສາຢ່າງເໝາະສົມ) ;
10. ຂະນະເຂົ້າຮ່ວມ ຫຼື ຝຶກແອບ ກິລາອາຊີບ
11. ການທົດສອບການແຂ່ງຂັນ (ນອກຈາກການຍ່າງ), ການທົດລອງຄວາມໄວ
12. ສິລະປະປ້ອງກັນຕົວ, ຕີມວຍ, ກິລາທາງອາກາດ ເຊິ່ງລວມມີການໂດດຈ້ອງ, ການເຫີນອາກາດ, ໂດດບັນຈີຈໍ້າ, ການແຂ່ງຂັນຄວາມໄວ ເທິງຫິມະ ຫຼື ກິລາ ເທິງນໍ້າກ້ອນ, ຂີ່ບ່ອນລູມ, ກິດຈະກຳທາງນໍ້າ ທີ່ມີຄວາມເລິກກວ່າ 50 ແມັດ, ການປີນເຂົາ ຫຼື ໄຕ່ໜ້າຜາ
13. ຂະນະປະຕິບັດໜ້າທີ່ຕາມວຽກງານທີ່ເປັນພະນັກງານຂົນເຄື່ອງຂຶ້ນລົງເຮືອ, ພະນັກງານເທິງເຮືອ ຫຼື ກ່ຽວຂ້ອງກັບວຽກງານເຕັກນິກ ຫຼື ການເດີນເຮືອ ພາຍໃນເຮືອ ແລະ ຫຼື ເປັນນັກກິລາອາຊີບ ຫຼື ມີອາຊີບເປັນນັກດຳນໍ້າອາຊີບ
14. ຂະນະກຳລັງຢູ່ໃນການຮັບໃຊ້ ຫຼື ປະຕິບັດໜ້າທີ່ ການດັບເພີງ ທີ່ກ່ຽວພັນເຖິງການທະຫານ, ການຝຶກແອບທາງທະຫານ, ຕຳຫຼວດ, ກອງກຳລັງພົນລະເຮືອນ ຫຼື ກຳລັງປ້ອງກັນຄວາມສະຫງົບອື່ນໆ (ບໍ່ວ່າຈະຕິດ ຫຼື ບໍ່ຕິດອາວຸດກໍ່ຕາມ)
15. ສົງຄາມ, ການບຸກລຸກ, ການເປັນສັດຕູຂອງຕ່າງຊາດ, ການດຳເນີນການທີ່ບໍ່ເປັນມິດ ຫຼື ຄ້າຍສົງຄາມ (ບໍ່ວ່າຈະມີການປະກາດ ຫຼື ບໍ່ປະກາດສົງຄາມກໍ່ຕາມ) ສົງຄາມກາງເມືອງ
16. ການຝ່າຝືນຄຳສັ່ງ, ການຈາລະຈົນ, ການລຸກຮື້ຂອງມວນຊົນ, ການຕໍ່ຕ້ານ, ການກໍ່ການກະບົດ, ການປະຕິວັດ, ການຊ່ວງຊີງອຳນາດ ຫຼື ການທະຫານ, ກົດໄອຍະການສຶກ, ສະພາວະປິດລ້ອມເມືອງ ຫຼື ເຫດການ ຫຼື ສາເຫດອື່ນໆ ທີ່ພາໃຫ້ເກີດມີການປະກາດກົດໄອຍະການສຶກ ຫຼື ສະພາວະການປິດລ້ອມເມືອງ
17. ການດຳເນີນການກໍ່ການຮ້າຍ ບໍ່ວ່າຈະມີສາເຫດ ຫຼື ເຫດການອື່ນທີ່ເຮັດໃຫ້ເກີດຄວາມເສຍຫາຍບໍ່ວ່າຈະກ່ອນ ຫຼື ຫຼັງ ສຳລັບຈຸດປະສົງນີ້, ການດຳເນີນການກໍ່ການຮ້າຍໝາຍເຖິງການກະທຳ ທີ່ລວມເອົາ ແຕ່ບໍ່ຈຳກັດ ການນຳໃຊ້ກຳລັງ ຫຼື ຄວາມຮຸນແຮງ ແລະ/ຫຼື ການຂົ່ມຂູ່ ຂອງບຸກຄົນ ຫຼື ກຸ່ມຄົນ, ບໍ່ວ່າຈະເປັນການກະທຳພຽງລຳພັງ ຫຼື ຕາງໜ້າໃຫ້ ຫຼື ມີສ່ວນກ່ຽວພັນກັບອົງກອນ, ລັດຖະບານ, ທີ່ໄດ້ດຳເນີນໄປເພື່ອຈຸດປະສົງທາງດ້ານການເມືອງ, ສາດສະໜາ, ລັດທິຄວາມເຊື່ອ ຫຼື ເພື່ອຈຸດປະສົງທີ່ຄ້າຍກັນນີ້ ເຊິ່ງລວມມີຄວາມຕັ້ງໃຈ ທີ່ຈະເຮັດໃຫ້ລັດຖະບານ ຫຼື ມວນຊົນ ຫຼື ກຸ່ມມວນຊົນໃດໜຶ່ງ ຕົກຢູ່ໃນສະພາບຄວາມຢ້ານກົວ
18. ວັດຖຸລະເບີດນິວເຄຼຍ, ປະລະມະນູ, ລັງສີ, ຫຼື ການເຈືອປົນສະມັດຕະພາບລັງສີ ຈາກພະລັງງານນິວເຄຼຍ, ຫຼື ຈາກຂອງເສຍ ທີ່ມາຈາກການເຜົາໄໝ້ພະລັງງານນິວເຄຼຍ. ສຳລັບຈຸດປະສົງຂອງຂໍ້ຍົກເວັ້ນນີ້, ການເຜົາໄໝ້ລວມເອົາຂະບວນການ ແຍກປະລະມະນູຂອງນິວເຄຼຍເອງ.

### ມາດຕາ 03: ຂອບເຂດກຳນົດອາຍຸຂອງຜູ້ໄດ້ຮັບການປະກັນໄພ

ການແຈ້ງອາຍຸຈະເທັດຈິງ ຫຼື ບໍ່ ແມ່ນຂຶ້ນກັບການໃຫ້ຂໍ້ມູນຂອງຜູ້ໄດ້ຮັບການປະກັນໄພ. ໃນກໍລະນີຜູ້ໄດ້ຮັບການປະກັນໄພ ມີອາຍຸຕໍ່າ ກ່ວາ 18 ປີ, ຫຼື ຫຼາຍກ່ວາ 60 ປີ, ໃນຂະນະທີ່ເລີ່ມເຮັດສັນຍາປະກັນໄພໃໝ່ ຫຼື ໄລຍະຕໍ່ສັນຍາ, ບໍລິສັດ ຈະບໍ່ທົດແທນຄ່າໃຊ້ຈ່າຍໃດໆ ທັງນັ້ນ. ນອກຈາກວ່າຈະໄດ້ຮັບການຕົກລົງເຫັນດີ ເປັນລາຍລັກອັກສອນຈາກບໍລິສັດເທົ່ານັ້ນ.

### ມາດຕາ 04: ຂອບເຂດກຳນົດເຂດແດນທີ່ໄດ້ຮັບການຄຸ້ມກັນ

ສັນຍາສະບັບນີ້ມີຜົນບັງຄັບໃຊ້:

ກ. ໃນປະເທດທີ່ສັນຍາໄດ້ລົງນາມ
ຂ. ໃນທຸກປະເທດທົ່ວໂລກ, ເຊິ່ງມີການພັກອາໃສຢູ່ບໍ່ເກີນ ສາມ (3) ເດືອນລຽນຕິດກັນ, ນອກຈາກວ່າໄດ້ມີການຍົກເວັ້ນໃນຕາຕະລາງສັນຍາປະກັນໄພ ຫຼື ສັນຍາເພີ່ມຂອງສັນຍາສະບັບນີ້.



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

### ມາດຕາ 05: ຕາຕະລາງຜົນປະໂຫຍດ

| ລ/ດ | ກໍລະນີ | ຜົນປະໂຫຍດ |
|---|---|---|
| 1 | **ການເສຍຊີວິດ** ເກີດຂຶ້ນພາຍໃນ ສິບສອງ (12) ເດືອນຕາມປະຕິທິນ ຈາກມື້ເກີດອຸປະຕິເຫດ. | ຕາມຈຳນວນຄ້ຳປະກັນທີ່ລະບຸໃນ ຕາຕະລາງສັນຍາປະກັນໄພນີ້ |
| 2 | **ພິການຖາວອນ** ເກີດຂຶ້ນພາຍໃນ ສິບສອງ (12) ເດືອນຕາມປະຕິທິນ ຈາກມື້ເກີດອຸປະຕິເຫດ. | ມູນຄ່ານີ້ແມ່ນອີງຕາມ ຈຳນວນມູນຄ່າ ຕາມທີ່ໄດ້ສະແດງຢູ່ໃນຕາຕະລາງສັນຍາປະກັນໄພ, ການຄິດໄລ່ອັດຕາພິການ ທີ່ຜູ້ຮັບການປະກັນໄພ ໄດ້ຮັບແມ່ນອີງຕາມອັດຕາສ່ວນການພິການ ທີ່ໄດ້ລະບຸໃນຕາຕະລາງ |
| 3 | ຄ່າປ່ວຍການປະຈຳວັນ ແມ່ນທົດແທນບໍ່ໃຫ້ເກີນ 360 ວັນ, ນັບຈາກມື້ທີ່ 6 ຂອງການເກີດອຸປະຕິເຫດ<br>ກ. ໃນຂະນະ ຜູ້ໄດ້ຮັບການປະກັນໄພ ກຳລັງຮັກສາພາຍະບານໃນໂຮງໝໍ<br>ຂ. ໃນຂະນະ ຜູ້ໄດ້ຮັບການປະກັນໄພ ຍັງພັກເຊົາປິ່ນປົວແຕ່ບໍ່ໄດ້ຮັກສາຢູ່ໂຮງໝໍ ແລະ ຍັງບໍ່ສາມາດປະຕິບັດໜ້າທີ່ວຽກງານໄດ້ເທື່ອ. | ກ. 100% ຂອງວົງເງິນຄ້ຳປະກັນ<br>ຂ. 50% ຂອງວົງເງິນຄ້ຳປະກັນ |
| 4 | ຄ່າປິ່ນປົວທີ່ຈຳເປັນຕ້ອງມີ ຜົນມາຈາກອຸປະຕິເຫດ | ຈຳນວນຕົວຈິງທີ່ເກີດ ແຕ່ຕ້ອງໄປ ຕາມມູນຄ່າປະກັນສູງສຸດ ທີ່ໄດ້ສະແດງໃນຕາຕະລາງສັນຍາປະກັນໄພ ອີງຕາມການແກ້ໄຂອຸປະຕິເຫດຄັ້ງໜຶ່ງ ຫຼື ຫຼາຍຄັ້ງ ທີ່ເກີດຈາກອຸປະຕິເຫດຄັ້ງໜຶ່ງ ແລະອັນດຽວກັນ |
| 5 | ຄ່າປົງສົບ ສິ່ງສະການ | ຕາມຈຳນວນຄ້ຳປະກັນທີ່ລະບຸໃນ ຕາຕະລາງສັນຍາປະກັນໄພນີ້ |

### ມາດຕາ 06: ເງື່ອນໄຂທົ່ວໄປ

1. ສັນຍາປະກັນໄພ ແລະ ຕາຕະລາງເງື່ອນໄຂສະເພາະຂໍ້ນີ້ ຖືວ່າເປັນສັນຍາສະບັບດຽວກັນ ແລະ ຄຳເວົ້າ ຫຼື ຖ້ອຍຄຳ ທີ່ມີຄວາມໝາຍ ສະເພາະທີ່ໄດ້ຕິດຄັດໄວ້ໃນສ່ວນໃດໜຶ່ງ ຫຼື ຕາຕະລາງ ເງື່ອນໄຂສະເພາະດັ່ງກ່າວຈະມີຄວາມໝາຍຕາມນັ້ນ ບໍ່ວ່າຈະປະກົດຢູ່ສ່ວນໃດກໍ່ຕາມ.
2. ຖ້າຫາກການສະເໜີ ຫຼື ການແຈ້ງຂອງຜູ້ຮັບການປະກັນໄພ ບໍ່ເປັນຄວາມຈິງໃນກໍລະນີໃດໜຶ່ງ ຫຼື ຖ້າຫາກປັດໃຈຂອງຄວາມເປັນຈິງທີ່ມີຜົນກະທົບຕໍ່ຄວາມສ່ຽງຫາກບໍ່ຖືກຕ້ອງ ຫຼື ຖືກລະເວັ້ນ ຫຼື ຖ້າຫາກການໄດ້ຮັບສັນຍາປະກັນໄພສະບັບນີ້ ຫຼື ການຕໍ່ສັນຍານີ້ ເປັນໄປໂດຍການບິດເບືອນ, ການໃຫ້ຂໍ້ມູນຜິດ, ຫຼື ການປົດບັງ, ຫຼື ຖ້າຫາກການຮຽກຮ້ອງໃຫ້ທົດແທນຫາກເປັນການສໍ້ໂກງ ຫຼື ເກີນຄວາມເປັນຈິງ, ຫຼື ຖ້າມີການແຈ້ງ ຫຼື ການໃຫ້ຂໍ້ມູນເປັນເລື່ອງທີ່ບໍ່ເປັນຄວາມຈິງ, ໃນກໍລະນີເລົ່ານີ້, ສັນຍາສະບັບນີ້ຖືເປັນໂມຄະ.
3. ບໍລິສັດ ຈະບໍ່ມີຄວາມຜູກມັດໃຫ້ມີການຕໍ່ສັນຍາ ແລະ ບໍ່ແມ່ນໜ້າທີ່ຂອງບໍລິສັດ ທີ່ຈະແຈ້ງໃຫ້ມີການຕໍ່ສັນຍາ, ແລະ ບໍລິສັດ ຈະບໍ່ຮັບຜິດຊອບຕໍ່ການສູນເສຍໃດໆ ທີ່ເກີດຂຶ້ນພາຍຫລັງສັນຍາສະບັບນີ້ໄດ້ໝົດອາຍຸລົງ.
4. ສັນຍາສະບັບນີ້ອາດຖືກສິ້ນສຸດລົງເວລາໃດກໍ່ໄດ້ ຕາມແຕ່ຄວາມຕ້ອງການຂອງຜູ້ໄດ້ຮັບການປະກັນໄພ ເຊິ່ງບໍລິສັດ ຈະເກັບອັດຕາຕາມໄລຍະສັ້ນ ທີ່ສັນຍາສະບັບນີ້ໄດ້ຖືກນຳໃຊ້ໄປແລ້ວ. ສັນຍາສະບັບນີ້ອາດຖືກສິ້ນສຸດລົງຕາມຄວາມຕ້ອງການຂອງບໍລິສັດ ໂດຍການແຈ້ງ ສິບສີ່ (14) ວັນລ່ວງໜ້າທາງຈົດໝາຍລົງທະບຽນ ສົ່ງໄປຫາທີ່ຢູ່ສຸດທ້າຍຂອງຜູ້ໄດ້ຮັບການປະກັນໄພ ເຊິ່ງບໍລິສັດ ຈະຕ້ອງຮັບຜິດຊອບທີ່ຈະແທນຄືນ ສ່ວນມູນຄ່າທີ່ຍັງເຫຼືອຂອງຄ່າປະກັນໄພ ຫຼັງຈາກມື້ທີ່ມີການຍົກເລີກສັນຍາ. ບໍລິສັດ ຈະຮັກສາ ຄ່າປະກັນໄພຕ່ຳສຸດ ແລະ ຈະແທນຄືນຈຳນວນທີ່ຍັງເຫຼືອພາຍຫຼັງການສິ້ນສຸດຂອງສັນຍາດັ່ງນີ້:

| ກຳນົດໄລຍະເວລາບໍ່ເກີນ | ອັດຕາຄ່າທຳນຽມລາຍປີທີ່ຖືກຄິດໄລ່ |
|---|---|
| ບໍ່ເກີນ 2 ເດືອນ | 40% |
| ບໍ່ເກີນ 3 ເດືອນ | 50% |
| ບໍ່ເກີນ 4 ເດືອນ | 60% |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | |
|---|---|
| ບໍ່ເກີນ 5 ເດືອນ | 70% |
| ບໍ່ເກີນ 6 ເດືອນ | 80% |
| ບໍ່ເກີນ 8 ເດືອນ | 90% |
| ຫຼາຍກວ່າ 8 ເດືອນ | 100% |

5. ໃນກໍລະນີເກີດອຸປະຕິເຫດທີ່ຈະນຳໄປສູ່ ຫຼື ມີທ່າທີ່ວ່າຈະນຳໄປສູ່ການຮຽກຮ້ອງສິນທົດແທນພາຍໃຕ້ສັນຍາປະກັນໄພສະບັບນີ້, ຜູ້ທີ່ໄດ້ຮັບການປະກັນໄພ ຕ້ອງແຈ້ງຫາ ບໍລິສັດ ທັນທີ ແລະ ຕ້ອງຢູ່ພາຍໃນ 14 ວັນ, ນັບຈາກມື້ເກີດອຸປະຕິເຫດ ພ້ອມກັບລາຍລະອຽດ ຂອງອຸປະຕິເຫດ, ການບາດເຈັບ ແລະ ຈະຕ້ອງຮັບການຮັກສາປິ່ນປົວໂດຍຖືກວິທີໃຫ້ໄວເທົ່າທີ່ຈະໄວໄດ້.
   ຜູ້ໄດ້ຮັບການປະກັນໄພ ຫຼື ຕົວແທນທາງກົດໝາຍ ຈະຕ້ອງອອກຄ່າໃຊ້ຈ່າຍເອງເພື່ອສະໜອງ ໃບຮັບຮອງ ແລະ ຂໍ້ມູນທີ່ບໍລິສັດ ອາດຈະຕ້ອງການ ໃນຮູບແບບ ແບບຟອມ ແລະ ຮູບແບບຊະນິດອື່ນໆທີ່ທາງບໍລິສັດ ອາດຕ້ອງການ ແລະ ຜູ້ໄດ້ຮັບການປະກັນໄພຕ້ອງປະຕິບັດຕາມຄວາມສົມເຫດສົມຜົນ ແລະ ຕ້ອງຍື່ນສະເໜີເພື່ອຂໍ ໃບກວດທາງການແພດ ໃນນາມຂອງ ບໍລິສັດ ແຕ່ຕ້ອງອອກຄ່າໃຊ້ຈ່າຍເອງ ແລະ ໃບແຈ້ງມໍລະນະກຳ ໃນກໍລະນີຜູ້ໄດ້ຮັບການປະກັນໄພເສຍຊີວິດ, ບໍລິສັດຈະຖືກມອບສິດໃນການສັນນະສູດໂດຍລາຍຈ່າຍຂອງບໍລິສັດເອງ ກ່ອນການປົງສົບພ້ອມບອກເວລາ ແລະ ສະຖານທີ່. ການປະຕິບັດຕາມເງື່ອນໄຂເວລາທີ່ກ່າວມາ ຖືເປັນປັດໃຈສຳຄັນສຳລັບເງື່ອນໄຂນີ້.
6. ຜູ້ໄດ້ຮັບການປະກັນໄພຕ້ອງໄດ້ແຈ້ງ ໃຫ້ບໍລິສັດ ຮັບຊາບທັນທີເຖິງການປ່ຽນແປງຊື່, ທີ່ຢູ່, ທຸລະກິດ, ອາຊີບ, ພ້ອມທັງການບາດເຈັບ, ພະຍາດ, ຄວາມບົກພ່ອງທາງຮ່າງກາຍ ຫຼື ການພະຍາບານຕ່າງໆ ເຊິ່ງຜູ້ໄດ້ຮັບການປະກັນໄພ ໄດ້ຮັບຜົນກະທົບ.
7. ຜູ້ໄດ້ຮັບການປະກັນໄພຕ້ອງໄດ້ແຈ້ງ ໃຫ້ບໍລິສັດ ຮັບຊາບທັນທີເຖິງການປະກັນໄພ ອຸປະຕິເຫດສ່ວນບຸກຄົນ ຫຼື ການປະກັນຊີວິດອື່ນໆ ທີ່ມີຜົນໃນລະຫວ່າງເວລາ ທີ່ການປະກັນໄພນີ້ຍັງຄຸ້ມກັນເຖິງການບາດເຈັບ ຫຼື ການສູນເສຍອື່ນໆ ທີ່ຜູ້ໄດ້ຮັບການປະກັນໄພ ໄດ້ເຮັດໄວ້.
8. ການເສຍຊີວິດຂອງຜູ້ໄດ້ຮັບການປະກັນໄພ ຈະຕ້ອງຖືກແຈ້ງທາງໃບຢັ້ງຢືນການເສຍຊີວິດ.
9. ທຸກແຈ້ງການ ຫຼື ການສື່ສານກັບ ບໍລິສັດ ທີ່ຮຽກຮ້ອງພາຍໃຕ້ເງື່ອນໄຂນີ້ ຈະຕ້ອງເປັນເອກະສານທີ່ເປັນການຂຽນ ຫຼື ພິມ.
10. ໃນຊ່ວງເວລາທີ່ມີການຮຽກຮ້ອງຄວາມເສຍຫາຍທີ່ເກີດຂຶ້ນພາຍໃຕ້ສັນຍາສະບັບນີ້, ຖ້າຫາກມີການປະກັນໄພອື່ນໆ ທີ່ຄຸ້ມຄອງຜູ້ໄດ້ ຮັບການປະກັນໄພ ຄືນດຽວກັນ, ບໍລິສັດ ຈະບໍ່ຮັບຜິດຊອບໃນການຈ່າຍແທນຄືນ ຫຼື ປະກອບສ່ວນຫຼາຍກວ່າອັດຕາສ່ວນແບ່ງ ສຳລັບຄ່າໃຊ້ຈ່າຍໃນການແພດ ແລະ ຜ່າຕັດ.
11. ຖ້າຈຳນວນບຸກຄົນທີ່ກວມເອົາເປັນກຸ່ມໂດຍສັນຍາປະກັນໄພນີ້ແມ່ນຫນ້ອຍກວ່າຈຳນວນຕົວຈິງຂອງບຸກຄົນໃນອົງການຈັດຕັ້ງຂອງຜູ້ຮັບປະກັນໄພ, ຄວາມຮັບຜິດຊອບຂອງບໍລິສັດຈະຖືກຫຼຸດລົງຕາມອັດຕາສ່ວນ ແລະ ຖືວ່າຜູ້ຮັບປະກັນໄພເປັນຜູ້ປະກັນໄພຂອງຕົນເອງໃນສ່ວນຕ່າງໆ.

    ເງື່ອນໄຂນີ້ຈະບໍ່ຖືກນຳໃຊ້ຖ້າຫາກວ່າບຸກຄົນທີ່ມີຊື່ໃນສັນຍາປະກັນໄພ.

**ມາດຕາ 07: ຕາຕະລາງຄິດໄລ່ສິນທົດແທນອັດຕາພິການ**

| | % ຂອງວົງເງິນເອົາປະກັນໄພ |
|---|---|
| **ກ. ເສຍຊີວິດ** (ເກີດຂຶ້ນພາຍໃນ 12 ເດືອນ (ຕາມປະຕິທິນ) ນັບຈາກວັນທີ່ເກີດອຸປະຕິເຫດ) | 100% |
| **ຂ. ພິການຖາວອນ** (ເກີດຂຶ້ນພາຍໃນ 12 ເດືອນ (ຕາມປະຕິທິນ) ນັບຈາກວັນທີ່ເກີດອຸປະຕິເຫດ) | |
| 1) ເສຍແຂນທັງສອງຂ້າງ | 100% |
| 2) ເສຍມືທັງສອງຂ້າງ ຫຼື ນິ້ວມືທັງໝົດ ແລະ ນິ້ວໂປ້ທັງສອງຂ້າງ | 100% |
| 3) ເປັນອຳມະພາດທົ່ວຮ່າງກາຍ | 100% |
| 4) ເສຍສະຕິທີ່ບໍ່ສາມາດປິ່ນປົວໄດ້ | 100% |
| 5) ການບາດເຈັບທີ່ຕ້ອງນອນພັກຮັກສາຢ່າງຖາວອນ | 100% |
| | 100% |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

| | | |
|---|---|---|
| 6) ການສູນເສຍທີ່ປ່າໄຫຼ່ | | 100% |
| 7) ແຕ່ປ່າໄຫຼ່ຫາແຂນສອກ | | 100% |
| 8) ບໍລິເວນແຂນສອກ | | 100% |
| 9) ແຕ່ແຂນສອກຫາຂໍ້ມື | | 100% |
| 10) ສູນເສຍມືບໍລິເວນຂໍ້ມື | | 50% |
| 11) ສູນເສຍນິ້ວມືທັງສີ່ ແລະ ນິ້ວໂປ້ຂອງມືຂ້າງໜຶ່ງ | | 40% |
| 12) ສູນເສຍນິ້ວມືທັງສີ່ | | |
| 13) ສູນເສຍນິ້ວໂປ້ | - ທັງສອງຂໍ້ | 25% |
| | - ໜຶ່ງຂໍ້ | 10% |
| 14) ສູນເສຍນິ້ວຊີ້ | - ສາມຂໍ້ | 15% |
| | - ສອງຂໍ້ | 10% |
| | - ໜຶ່ງຂໍ້ | 5% |
| 15) ສູນເສຍນິ້ວກາງ | - ສາມຂໍ້ | 10% |
| | - ສອງຂໍ້ | 7% |
| | - ໜຶ່ງຂໍ້ | 5% |
| 16) ສູນເສຍນິ້ວນາງ | - ສາມຂໍ້ | 10% |
| | - ສອງຂໍ້ | 7% |
| | - ໜຶ່ງຂໍ້ | 3% |
| 17) ສູນເສຍນິ້ວກ້ອຍ | - ສາມຂໍ້ | 10% |
| | - ສອງຂໍ້ | 7% |
| | - ໜຶ່ງຂໍ້ | 3% |
| 18) ສູນເສຍດູກຝາມື | - ເສຍໜຶ່ງຂໍ້ຝາມື ຫຼື ສອງຂໍ້ (ຫຼື ຫຼາຍກ່ວານັ້ນ) | 3% |
| | - ຂໍ້ທີສາມ, ສີ່, ຫ້າ (ໃນກໍລະນີສູນເສຍເພີ່ມ) | 2% |
| 19) ການສູນເສຍຂາ | - ທີ່ສະໂພກ | 100% |
| | - ລະຫວ່າງສະໂພກຫາຫົວເຂົ່າ | 100% |
| | - ລຸ່ມຫົວເຂົ່າ | 18% |
| | - ທັງໝົດ | 6% |
| 20) ການສູນເສຍນິ້ວຕີນ | - ທັງໝົດ | 18% |
| | - ທັງສອງຂໍ້ໃຫຍ່ | 6% |
| | - ໜຶ່ງຂໍ້ໃຫຍ່ | 3% |
| | - ຂໍ້ໃຫຍ່ອື່ນໆ, ຖ້າເສຍນິ້ວຫຼາຍກ່ວາໜຶ່ງອັນ | 3% |
| 21) ການສູນເສຍທັງໝົດ ແລະ ຖາວອນຂອງ | - ການເບິ່ງເຫັນທັງໝົດຂອງທັງສອງຂ້າງ | 100% |
| | - ການເບິ່ງເຫັນທັງໝົດຂອງທັງໜຶ່ງຂ້າງ | 100% |
| | - ການເບິ່ງທັງໝົດຂອງຕາໜຶ່ງຂ້າງ, ຍົກເວັ້ນການຮັບແສງ | 50% |
| | - ເລນກະຈົກຕາໜຶ່ງຂ້າງ | 50% |
| 22) ການສູນເສຍການໄດ້ຍິນ | - ຫູທັງສອງຂ້າງ | 75% |
| | - ຫູຂ້າງດຽວ | 20% |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

23) ການສູນເສຍສຽງຖາວອນ 50%

24) ການເຜົາໄໝ້ລະດັບ3

ກ) ຫົວ - ຄວາມສູນເສຍຕໍ່ສັດສ່ວນຂອງຮ່າງກາຍທັງໝົດ

i) ຫຼາຍກ່ວາ ຫຼື ເທົ່າກັບ 2% ແຕ່ໜ້ອຍກ່ວາ 5% 50%

ii) ຫຼາຍກ່ວາ ຫຼື ເທົ່າກັບ 5% ແຕ່ໜ້ອຍກ່ວາ 8% 75%

iii) ຫຼາຍກ່ວາ ຫຼື ເທົ່າກັບ 8% 100%

ຂ) ຮ່າງກາຍ– ຄວາມສູນເສຍຕໍ່ສັດສ່ວນຂອງຮ່າງກາຍທັງໝົດ

i) ຫຼາຍກ່ວາ ຫຼື ເທົ່າກັບ 10% ແຕ່ໜ້ອຍກ່ວາ 15% 50%

ii) ຫຼາຍກ່ວາ ຫຼື ເທົ່າກັບ 15% ແຕ່ໜ້ອຍກ່ວາ 20% 75%

iii) ຫຼາຍກ່ວາ ຫຼື ເທົ່າກັບ 20% 100%

ໃນກໍລະນີທີ່ການບາດເຈັບບໍ່ໄດ້ລະບຸໄວ້ໃນຂໍ້ ຂ. ບໍລິສັດ ຂໍສະຫງວນສິດການຈ່າຍຕົວຈິງຕາມຄວາມເໝາະສົມ.

ເປີເຊັນລວມກັນທັງໝົດທີ່ຈະຕ້ອງຈ່າຍຕໍ່ອຸປະຕິເຫດໃດໜຶ່ງ ຫຼື ໃນໄລຍະເວລາຂອງການປະກັນໄພ ແມ່ນຕ້ອງບໍ່ເກີນ 100%. ໃນກໍລະນີທີ່ມີການຈ່າຍເຕັມ 100% ໃນໄລຍະຂອງການປະກັນໄພ, ການປະກັນໄພ ທັງໝົດນີ້ຈະໝົດຜົນບັງຄັບໃຊ້ໃນທັນທີ. ການສູນເສຍອື່ນໆທີ່ຕໍ່າກ່ວາ 100% ທີ່ໄດ້ຈ່າຍໃນໄລຍະຂອງການປະກັນໄພຈະຫຼຸດມູນຄ່າປະກັນໄພ ໃນກໍລະນີເສຍຊີວິດ ແລະ ພິການຖາວອນ ຫັກຈາກຈຳນວນມູນຄ່ານັ້ນ ນັບຈາກວັນທີທີ່ເກີດອຸປະຕິເຫດ ຈົນເຖິງມື້ທີ່ສັນຍາໝົດອາຍຸ.

ໃນກໍລະນີທີ່ມີການເສຍຫາຍ ຫຼື ບາດເຈັບຂອງອະໄວຍະວະ ທີ່ມີຄວາມເປັນພິການຢູ່ແລ້ວ, ຄ່າເສຍຫາຍທີ່ຕ້ອງຈ່າຍຈະຖືກຈຳກັດຢູ່ ລະຫວ່າງສ່ວນຕ່າງລະຫວ່າງສະພາວະກ່ອນ ແລະ ພາຍຫຼັງຂອງອຸປະຕິເຫດ.

## ພາກທີ IV ຂໍ້ກຳນົດສຸດທ້າຍ

### ມາດຕາ 01: ອາຍຸ ແລະ ການຄຸ້ມຄອງ

ສັນຍາປະກັນສຸຂະພາບ ແລະ ປະກັນໄພອຸປຕິເຫດສ່ວນບຸກຄົນ ຈະສາມາດໃຫ້ການຄຸ້ມກັນໄດ້ ແຕ່ອາຍຸ 18 ເຖິງ 60ປີ, ດັ່ງນັ້ນ ການຄຸ້ມກັນສຳລັບ ປະກັນສຸຂະພາບ ແລະ ປະກັນໄພອຸປຕິເຫດສ່ວນບຸກຄົນ ໃນສັນຍາປະກັນໄພ ອີຊີ ໂກລ ນີ້ ຈະສາມາດຄຸ້ມຄອງ ຜູ້ໄດ້ຮັບການປະກັນໄພອາຍຸຮອດ 60ປີ ເທົ່ານັ້ນ, ໝາຍຄວາມວ່າ ຜູ້ໄດ້ຮັບການປະກັນໄພທີອາຍຸສູງກວ່າ 60ປີ ຈະບໍ່ສາມາດຕໍ່ສັນຍາການຄຸ້ມກັນຂອງປະກັນສຸຂພາບ ແລະ ອຸປະຕິເຫດສ່ວນບຸກຄົນໄດ້ ນອກຈາກວ່າຈະໄດ້ຮັບການຕົກລົງເຫັນດີ ເປັນລາຍລັກອັກສອນຈາກບໍລິສັດ ແຕ່ສັນຍາປະກັນຊີວິດຍັງສາມາດສືບຕໍ່ໄດ້ປົກກະຕິ ພາຍໃຕ້ສັນຍາປະກັນຊີວິດ ອີຊີ ທຳມະດາ

ບໍລິສັດຂໍສະຫງວນສິດໃນການຍົກເລີກ, ບໍ່ຕໍ່ສັນຍາ ຫຼື ປ່ຽນແປງລາຄາປະກັນໄພ ໃນສ່ວນຂອງປະກັນສຸຂະພາບ ໃນເວລາຕໍ່ສັນຍາ

### ມາດຕາ 02: ການດັດແກ້ສັນຍາປະກັນໄພ.

ທຸກການປ່ຽນແປງ ແລະ ເພີ່ມເຕີມເນື້ອໃນ ໃນສັນຍາປະກັນໄພຈະມີຜົນສັກສິດໄດ້ ກໍຕໍ່ເມື່ອໄດ້ຮັບການຕົກລົງເຫັນດີ ຂອງທັງສອງຝ່າຍ ລະຫວ່າງບໍລິສັດປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພ ເທົ່ານັ້ນ. ຊຶ່ງຈະເຮັດບົດບັນທຶກ ຫລື ເອກະສານຊ້ອນທ້າຍຄັດຕິດ ເພື່ອຄັດຕິດກັບສັນຍາປະກັນໄພ.

**ມາດຕາ 03: ການແກ້ໄຂຂໍ້ຂັດແຍ່ງ.**

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກສັນຍາປະກັນໄພສະບັບນີ້ ຈະຕ້ອງໄດ້ຮັບການແກ້ໄຂໂດຍສັນຕິວິທີ ລະຫວ່າງຜູ້ໄດ້ຮັບປະກັນໄພ ແລະ ບໍລິສັດປະກັນໄພກອ່ນ;

ໃນກໍລະນີ, ທັງສອງຝ່າຍ ຫາກບໍ່ສາມາດຕົກລົງ ຫລື ແກ້ໄຂຂໍ້ຂັດແຍ່ງນັ້ນໄດ້ ຝ່າຍໃດຝ່າຍໜຶ່ງ ຫລື ທັງສອງຝ່າຍ ສາມາດນຳ ບັນຫາດັ່ງກ່າວ ໄປແກ້ໄຂຕາມຂະບວນລະບຽບກົດໝາຍ ຂອງ ສປປ ລາວ;

ທັງສອງຝ່າຍ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

ໝາຍເຫດ : ການຊຳລະຄ່າປະກັນໄພຕາມມູນຄ່າໃນໃບເກັບເງິນນີ້ ຫມາຍເຖິງທ່ານໄດ້ຍອມຮັບເງື່ອນໄຂສະເພາະສັນຍາປະກັນໄພ ແລະ ສັນຍາຂອງປະກັນໄພ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la